# ການນຳໃຊ້ເຄື່ອງປ່າຂອງດົງຈາກປ່າທຳມະຊາດ ບ້ານ ນ້ຳມີ່ງ ແລະ ບ້ານ ກິ່ວຕະລຸນ II ເມືອງ ຊຽງເງິນ ແຂວງ ຫຼວງພະບາງ



ບົດລາຍງານ ການຝຶກອົບຮົມ PRA ຂອງພະນັກງານເມືອງ ຊຽງເງິນ

ໂດຍການນຳພາຂອງ


ທ່ານ ນ. ນິດ ຄຳ ຈັນທະວົງ ວິຊາການປ່າໄມ້

ທ່ານ ນ. ພອນທິບ ທອງດາ ວິຊາການປ່າໄມ້

ທ່ານ ນ. ພອນສະນິດ ຜີນນະຈິດ ວິຊາການເສດຖະກິດ-ສັງຄົມ

ທ່ານ ມາຕິນ ໄກຣມານສ໌ ທີ່ປຶກສາ ເຄື່ອງປ່າຂອງດົງ


ຫຼວງພະບາງ ມັງກອນ 2007

# ສາລະບານ


| | |
|---|---|
| ບົດຄັດຫຍໍ້ | 2 |
| ຄຳນຳ | 3 |
| ຜົນໄດ້ຮັບ | 5 |
| 1. ສະພາບລວມຂອງບ້ານ | 5 |
| 2. ການຈັດປະເພດເຄື່ອງປ່າຂອງດົງທີ່ສຳຄັນ | 6 |
| 3. ເຂດເກັບເຄື່ອງປ່າຂອງດົງ | 7 |
| 4. ດ້ານການຜະລິດກະສິກຳ | 8 |
| 5. ປະຕິທິນລະດູການອາຫານ | 9 |
| 6. ລາຍຮັບ-ລາຍຈ່າຍ | 11 |
| 7. ການຄັດເລືອກຜະລິດຕະພັນເຄື່ອງປ່າຂອງດົງທີ່ສຳຄັນ | 13 |
| 8. ການວິເຄາະບັນຫາ | 17 |
| 9. ການສຳຫຼວດພື້ນທີ່ | 18 |
| 10. ການສຳພາດ 3 ລະດັບຄອບຄົວ | 19 |
| ສະຫຼຸບ | 22 |
| ຂໍ້ສະເໜີ | 25 |
| ເອກະສານຊ້ອນທ້າຍ | 26 |

# ບົດຄັດຫຍໍ້

ສໍາລັບບ້ານ ເປົ້າໝາຍຂອງໂຄງການແມ່ນມີຢູ່ 2 ບ້ານຄື: ບ້ານ ນໍ້າມິ່ງ ແລະ ບ້ານ ກິ່ວຕະລຸນ II ເພື່ອເປັນຕົວຢ່າງໃນການຝຶກອົບຮົມໃຫ້ແກ່ພະນັກງານເມືອງ ຊຽງເງິນ, ຂໍ້ມູນທີ່ເກັບແມ່ນເປັນຂໍ້ມູນເບື້ອງຕົ້ນໂດຍການນໍາໃຊ້ເຄື່ອງມືແບບ RRA ແລະ PRA (ການເກັບຂໍ້ມູນແບບມີສ່ວນຮ່ວມຂອງຊາວກະສິກອນ), ນອກຈາກນັ້ນຍັງໄດ້ສໍາພາດຄອບຄົວຈໍານວນ 3 ຄອບຄົວ/ບ້ານ ຄື: ຖານະຮັ່ງມີ 1 ຄອບຄົວ, ປານກາງ 1 ຄອບຄົວ, ທຸກຈົນ 1 ຄອບຄົວເພື່ອເປັນຕົວແບບໃນການຢັ້ງຢືນຂໍ້ມູນ.

ຂັ້ນຕອນທີ່ໃຊ້ໃນການເກັບກໍາຂໍ້ມູນແມ່ນມີຢູ່ 7 ຂັ້ນຕອນຄື:

1. ຈັດລະດັບຜະລິດຕະພັນເຄື່ອງປ່າຂອງດົງທີ່ສໍາຄັນ, ແຍກລະຫວ່າງ ກິນ, ຂາຍ ແລະ ຊົມໃຊ້.
2. ແຕ້ມເຂດເກັບກູ້ເຄື່ອງປ່າຂອງດົງຢູ່ໃນບ້ານ
3. ແຕ້ມປະຕິທິນລະດູການຜະລິດ
4. ແຕ້ມປະຕິທິນລະດູການອາຫານ
5. ແຕ້ມປະຕິທິນ ລາຍຮັບ-ລາຍຈ່າຍ
6. ມາດຖານການຄັດເລືອກຜະລິດຕະພັນ
7. ວິເຄາະບັນຫາຜະລິດຕະພັນທີ່ສໍາຄັນ

ພາຍຫຼັງທີ່ສໍາເລັດບັນດາກິດຈະກໍາແລ້ວໄດ້ເຂົ້າສໍາຫຼວດພື້ນທີ່ປ່າເພື່ອໄປເບິ່ງນິເວດບ່ອນທີ່ເຄື່ອງປ່າຂອງດົງແຕ່ລະຊະນິດມັກເກີດ

ຜ່ານການເກັບກໍາຂໍ້ມູນໃນຄັ້ງນີ້ສາມາດຮູ້ເຖິງຜະລິດຕະພັນທີ່ສໍາຄັນແຕ່ລະປະເພດຄື:

- ເຄື່ອງປ່າຂອງດົງສໍາລັບກິນ ໜໍ່ຊາງ , ປາ, ໜໍ່ຫວາຍຂົມ, ຜັກກູດນໍ້າ ແລະ ໝູ
- ເຄື່ອງປ່າຂອງດົງສໍາລັບຂາຍ ແຂມ, ປໍສາ, ໝາກປີປ່າ ແລະ ໜໍ່ຊາງ
- ເຄື່ອງປ່າຂອງດົງສໍາລັບຊົມໃຊ້ໄມ້ຈິງໃຊ້ເຮັດຟືນດັງ, ໄມ້ຊາງ, ຫຍ້າຄາ ແລະ ໃບຕອງກ້ວຍປ່າ



# ຄຳນຳ

ເມືອງຊຽງເງິນເປັນເມືອງໜຶ່ງທີ່ນອນຢູ່ໃນແຂວງຫຼວງພະບາງ, ພື້ນທີ່ປ່າສ່ວນຫຼາຍແມ່ນລັກສະນະເປັນປ່າເຫຼົ່າເນື່ອງຈາກວ່າປະຊາຊົນໃນເຂດດັ່ງກ່າວແມ່ນເຮັດໄຮ່ເປັນອາຊີບຕົ້ນຕໍ, ທີ່ປະກອບດ້ວຍເຄື່ອງປ່າຂອງດົງຫຼາຍ ຊະນິດເຊັ່ນ: ແຂມ, ປໍສາ, ໜໍ່ໄມ້ຫົກ, ໜໍ່ໄມ້ຊາງ, ໜໍ່ໄມ້ບົງ, ຜັກຫວານ ແລະ ມີເຫັດຫຼາຍຊະນິດເຊັ່ນ: ເຫັດເຜາະ, ເຫັດປວກ, ເຫັດດິນ ແລະ ເຫັດທີ່ອອກຕາມຂອນຕ່າງໆ, ນອກຈາກນີ້ແລ້ວຍັງມີ ປູ, ປາ, ຫອຍ, ກຸ້ງ ແລະ ຜັກທີ່ສາມາດນຳເອົາມາເປັນອາຫານ.

ດັ່ງນັ້ນ, ເພື່ອຕອບສະໜອງທາງດ້ານ ຂໍ້ມູນໃຫ້ແກ່ໂຄງການສຸພານິມິດ ເມືອງຊຽງເງິນ ແຂວງຫຼວງພະ ບາງ ຈຶ່ງມີທິດທາງໃນການສຶກສາເພື່ອເກັບກຳຂໍ້ມູນກ່ຽວກັບເຄື່ອງປ່າຂອງດົງ, ເພື່ອຊອກຫາພະລິດຕະພັນທີ່ເປັນບູລິມະ ສິດຂອງບ້ານທີ່ເປັນໄປໄດ້ສຳລັບການພັດທະນາທາງດ້ານ ການຕະຫຼາດ ແລະ ການຄູ້ມຄອງຈັດສັນເຄື່ອງ ປ່າຂອງດົງ ນຳໃຊ້ແບບຍືນນານຕະຫຼອດ ການເກັບກຳຂໍ້ມູນໃນຄັ້ງນີ້ແມ່ນສູນຄົ້ນຄວ້າກະສິກຳ ແລະ ປ່າໄມ້ພາກເໜືອເປັນຜູ້ຕອບສະໜອງທາງດ້ານເຕັກນິກ ແລະ ວິທີການ ໃຫ້ແກ່ພະນັກງານເມືອງ.

## I. ຈຸດປະສົງ

1. ເພື່ອເປັນການຝຶກທາງດ້ານເຕັກນິກ ແລະ ວິທີການຈັດຕັ້ງປະຕິບັດໃຫ້ກັບພະນັກງານເມືອງ
2. ເກັບກຳຂໍ້ມູນເບື້ອງຕົ້ນກ່ຽວກັບເຄື່ອງປ່າຂອງດົງໂດຍນຳໃຊ້ເຄື່ອງມືແບບ RRA, PRA
3. ສຳຫຼວດພື້ນທີ່ເພື່ອສຶກສາເບິ່ງສະພາບລວມຂອງປ່າ ແລະ ລະບົບນິເວດຂອງເຄື່ອງປ່າຂອງດົງ

## II. ສະຖານທີ່

ສຳລັບບ້ານທີ່ຈະສຶກສາມີຢູ່ທັງໝົດ ມີຢູ່ 2 ບ້ານຄື : ບ້ານ ນ້ຳມິ່ງ ແລະ ບ້ານ ກິ່ວຕະລຸບII ເພື່ອເປັນຕົວຢ່າງໃນການຝຶກອົບຮົມໃຫ້ແກ່ພະນັກງານງານເມືອງ.

## III. ເວລາໃນການຈັດຕັ້ງປະຕິບັດ

ສຳລັບການຈັດຕັ້ງປະຕິບັດໄດ້ໃຊ້ເວລາຢູ່ 7 ວັນຄື:

- ວັນທີ່ 22/1/07 ຝຶກອົບຮົມເບື້ອງຕົ້ນໃຫ້ແກ່ພະນັກງານເມືອງ (ຫ້ອງການບ້ານສ່ວນຫຼວງ)
- ວັນທີ່ 23-26/1/07 ປະຕິບັດຕົວຈິງຢູ່ພາກສະໜາມພ້ອມເດີນສຳຫຼວດປ່າ (ບ້ານ ນ້ຳມິ່ງ ແລະ ບ້ານ ກິ່ວຕະລຸບII)
- ວັນທີ່ 27/1/07 ລວບລວມຂໍ້ມູນ ແລະ ຂຽນບົດລາຍງານ
- ວັນທີ່ 28/1/07 ເດີນທາງກັບຫຼວງພະບາງ

## IV. ວິທີການຈັດຕັ້ງປະຕິບັດ

ການຈັດຕັ້ງປະຕິບັດແມ່ນເຮັດຢູ່ 3 ມື້/ບ້ານຄື :

- ມື້ທີ່1 : ນັດເຕົ້າໂຮມຊາວບ້ານເພື່ອແຈ້ງຈຸດປະສົງ ແລະ ປະຕິບັດແຕ່ລະກິດຈະກຳ
- ມື້ທີ່2 : ເດີນສຳຫຼວດພື້ນທີ່ປ່າຂອງບ້ານ (ຊາວບ້ານເປັນຜູ້ນຳພາ).
- ມື້ທີ່3 : ນັດເຕົ້າໂຮມຊາວບ້ານເພື່ອອະທິບາຍແຕ່ລະກິດຈະກຳທີ່ເຮັດ 2 ມື້ຜ່ານມາ ແລະ ລວບລວມຂໍ້ມູນຄືນ

ສຳລັບກິດຈະກຳທີ່ຈັດຕັ້ງປະຕິບັດແມ່ນປະກອບມີຢູ່ 5 ຂັ້ນຕອນຄື :

<u>ຂັ້ນຕອນທີ່</u> 1

ແນະນຳວິທີການຈັດຕັ້ງປະຕິບັດໃຫ້ກັບພະນັກງານຫ້ອງການກະສິກຳ ເມືອງ ຊຽງເງິນ, ພ້ອມທັງນັດສຳພາດຊາວກະສິກອນ

<u>ຂັ້ນຕອນທີ່</u> 2

ລວບລວມຊາວກະສິກອນໝົດທຸກຄອບຄົວພາຍໃນບ້ານເພື່ອສະເໜີຈຸດປະສົງ, ຫຼັງຈາກນັ້ນເລືອກເອົາ 20 ຄອບຄົວເພື່ອເປັນສວນຮ່ວມ (ມີຄອບຄົວຮັ່ງມີ, ປານກາງ ແລະ ທຸກຈົນ) ເພື່ອປະຕິບັດກິດຈະກຳນຳ.

<u>ຂັ້ນຕອນທີ່</u> 3

ອະທິບາຍຂັ້ນຕອນ ແລະ ວິທີການນຳໃຊ້ອຸປະກອນ, ຈາກນັ້ນແມ່ນໃຫ້ຊາວກະສິກອນປະຕິບັດເອງ, ເຊິ່ງມີບັນດາເຄື່ອງມືຕ່າງໆດັ່ງລຸ່ມນີ້ :

1. ຈັດລະດັບຜະລິດຕະພັນເຄື່ອງປ່າຂອງດົງທີ່ສຳຄັນ, ແຍກລະຫວ່າງ ກິນ, ຂາຍ ແລະ ຊົມໃຊ້.
2. ແຕ້ມເຂດເກັບກູ້ເຄື່ອງປ່າຂອງດົງຢູ່ໃນບ້ານ
3. ແຕ້ມປະຕິທິນລະດູການຜະລິດ
4. ແຕ້ມປະຕິທິນລະດູການອາຫານ
5. ແຕ້ມປະຕິທິນ ລາຍຮັບ-ລາຍຈ່າຍ
6. ມາດຖານການຄັດເລືອກຜະລິດຕະພັນ
7. ວິເຄາະບັນຫາຜະລິດຕະພັນທີ່ສຳຄັນ

<u>ຂັ້ນຕອນທີ່</u> 4

ສຳຫຼວດພື້ນທີ່ເຄື່ອງປ່າຂອງດົງ (ຊາວບ້ານເປັນຜູ້ນຳພາ).

<u>ຂັ້ນຕອນທີ່</u> 5

ລວບລວມຊາວບ້ານໝົດບ້ານໃຫ້ຕົວແທນຂອງຊາວບ້ານແຕ້ມແຜນວາດໃນການຍ່າງສຳ ຫຼວດພື້ນທີ່ພ້ອມທັງສະຫຼຸບບັນດາກິດຈະກຳທີ່ເຮັດຜ່ານມາ.

# ຜົນໄດ້ຮັບ

## 1. ສະພາບລວມຂອງບ້ານ

ອີງຕາມການສຳຫຼວດພື້ນທີຕົວຈິງແລະການໃຫ້ສຳພາດຈາກເຖົ້າແກ່ແນວໂຮມບ້ານ.ທີມງານສາມາດສະຫຼຸບໄດ້ວ່າລັກສະນະລວມຂອງພື້ນທີ່ປ່າທັງ2ບ້ານແມ່ນມີລັກສະນະຄ້າຍຄືກັນຄືເປັນປ່າເລົ່າເນື່ອງຈາກວ່າທັງສອງບ້ານຕັ້ງຢູ່ເຂດເນີນສູງບໍ່ມີທີ່ງພຽງພໍທີ່ຈະເຮັດນາໄດ້ດັ່ງນັ້ນເຂົ້າຈິ່ງຢຶດຖືກອາຊີບເຮັດໄຮ່ເປັນຕົ້ນຕໍເປັນສາຍເຫດທີ່ເຮັດໃຫ້ປ່າທີ່ເຄີຍເປັນປ່າດົງມາກ່ອນກາຍມາເປັນປ່າເລົ່າແລະບາງບ່ອນກໍ່ມີລັກສະນະເປັນທົ່ງຫ້ຍາຄາເຄື່ອງປ່າຂອງດົງທີ່ເປັນ ສິນຄ້າພົບເຫັນໃນເຂດນີ້ແມ່ນແຂມ,ປໍສາ, ສວນເຄື່ອງປ່າຂອງດົງທີ່ນຳມາບໍລິໂພກ ແລະນຳມາຊົມ ໃຊ້ແມ່ນມີຫຼາຍຊະນິດ.

| ຂໍ້ມູນຂອງບ້ານ | ບ້ານນ້ຳມີ່ງ | ບ້ານກິ່ວຕະລຸນ II |
|---|---|---|
| ຈຳນວນຄອບຄົວ | 114 | 94 |
| ▪ ຄອບຄົວຮັ່ງມີ | | 56 |
| ▪ ຄອບຄົວປານກາງ | | 37 |
| ▪ ຄອບຄົວທຸກຈົນ | | 2 |
| ຈຳນວນພົນລະເມືອງ | 600 | 561 |
| ເພດຍິງ | 289 | 274 |
| ຊົນເຜົ່າ | ລາວລຸ່ມ35ຄຄ,ລາວເທິງ79ຄຄ | ລາວເທິງ |
| ເນື້ອທີ່ດິນປຸກສ້າງ | 159.486ເຮັກຕາ | 124.896 ເຮັກຕາ |
| ເນື້ອທີ່ປ່າໄມ້ | | |
| ເນື້ອທີ່ນາ | | |
| ເນື້ອທີ່ໄຮ່ | 375.105ເຮັກຕາ | 206.939 ເຮັກຕາ |
| ເນື້ອທີ່ປູກຖົ່ວດິນ | | |
| ເນື້ອທີ່ດິນກະສິກຳ | | |
| ເນື້ອທີ່ອື່ນໆ | | |
| ປ່າຄຳຂອງບ້ານ | | 4 ເຮັກຕາ |
| ປ່າສະຫງວນ | | 5 ເຮັກຕາ |
| ປ່າຫວງຫ້າມ | | 85 ເຮັກຕາ |

* ສຳລັບຂໍ້ມູນສັດລ້ຽງນາຍບ້ານ ບ້ານນ້ຳມີ່ງ ບໍ່ໄດ້ສັງລວມໃຫ້ເນື່ອງຈາກວ່າ ຂໍ້ມູນໃນປີກ່ອນເສຍບໍ່ທັນໄດ້ສັງລວມຄືນ, ສ່ວນບ້ານ ກິ່ວຕະລຸນ II ປ່ຽນນາຍບ້ານໃໝ່ບໍ່ທັນໄດ້ສັງລວມ

## 2. ການຈັດປະເພດເຄື່ອງປ່າຂອງດົງທີ່ສຳຄັນ

ການຄັດເລືອກແມ່ນໄດ້ຈັດອອກເປັນ 3 ປະເພດທີ່ສຳຄັນຄື: ກິນ, ຂາຍ ແລະ ຊົມໃຊ້ເຊັ່ນ: ຢູ່ໃນຕາຕະລາງລຸ່ມນີ້ສ່ວນລາຍລະອຽດແມ່ນຢູ່ໃນເອກກະສານຊ້ອນທ້າຍ

| ຊະນິດການນຳໃຊ້ | ຊື່ຜະລິດຕະພັນທີ່ສຳຄັນ | |
|---|---|---|
| | ບ້ານ ນ້ຳມີ່ງ | ບ້ານ ກິ່ວຕະລຸນ II |
| *ກິນ* | ໜໍ່ຊາງ | ປາ |
| | ປາ | ຜັກກູດນ້ຳ |
| | ໜໍ່ຫວາຍຂົມ | ໜູ |
| *ຂາຍ* | ແຂມ | ແຂມ |
| | ປໍສາ | ປໍສາ |
| | ໝາກປີປ່າ | ໜໍ່ຊາງ |
| *ຊົມໃຊ້* | ຟືນ | ໄມ້ຈິງ(ຟືນ) |
| | ໄມ້ຊາງ | ໄມ້ຊາງ |
| | ຫັຍາຄາ | ໃບຕອງປ່າ |

ອີງຕາມການຈັດປະເພດເຫັນວ່າ ປາ ມີຄວາມສຳຄັນຫຼາຍສຳລັບກິນເນື່ອງຈາກວ່າສາມາດຫາ ກິນໄດ້ຕະຫຼອດປີ , ນອກຈາກ ນັ້ນຍັງມີໜໍ່ຊາງ ແລະ ຜັກກູດນ້ຳທີ່ຊາວກະສິກອນ ມັກເກັບຈາກປ່າທຳມະຊາດ ມາເປັນອາຫານ, ສຳລັບການຂາຍແມ່ນ ແຂມ ແລະ ປໍສາ ທັງ 2 ຊະນິດແມ່ນມີຫຼາຍໃນເຂດນີ້ເພາະມີທັງເກັບ ຈາກປ່າມາຂາຍ ແລະ ປູກເອງຕາມພື້ນ ທີ່ຂອງ ຊາວກະ ສິກອນ, ສຳຄັນສຳລັບຊົມໃຊ້ແມ່ນ ໄມ້ຈິງຕາຍປະຊາຊົນ ນິຍົມກັນເກັບມາໃຊ້ເຮັດ ຟືນດັງ.

## 3. ເຂດເກັບເຄື່ອງປ່າຂອງດົງ

ຊະນິດເຄື່ອງປ່າຂອງດົງແມ່ນມີຄວາມແຕກຕ່າງກັນຕາມແຕ່ລະເຂດການປົກຄອງຂອງບ້ານ

ບ້ານ ນ້ຳມີ່ງ:

ໝົດບ້ານປະກອບມີຢູ່ 3 ເຂດຄື: ເຂດຫ້ວຍຊຶງ, ເຂດຫ້ວຍຈະລອງ ແລະ ເຂດຫ້ວຍລຸມ, ແຕ່ລະເຂດລ້ວນແຕ່ມີ ເຄື່ອງ ປ່າຂອງດົງຫຼາຍຊະນິດເຊັ່ນ:

ເຂດຫ້ວຍຊີງ

ຫ່າງຈາກບ້ານປະມານ 1 ຊົ່ວໂມງ, ຢູ່ໃນເຂດນີ້ມີເຄື່ອງປ່າຂອງດົງຫຼາຍຊະນິດເຊັ່ນ: ແຂມ, ປໍສາ, ໝາກປີປ່າ,ຜັກຫວານ ແລະ ຜັກຮາກ, ຜະລິດຕະພັນທີ່ມີຫຼາຍກ່ວາໝູ່ໃນ ເຂດນີ້ແມ່ນ: ແຂມ, ຮອງລົງ ມາ ແມ່ນ ໝາກປີປ່າ ແລະ ປໍສາ.

ເຂດຫ້ວຍລຸມ

ຫ່າງຈາກບ້ານປະມານ 2 ຊົ່ວໂມງ, ຜະລິດຕະພັນທີ່ມີຫຼາຍກ່ວາໝູ່ໃນ ເຂດນີ້ແມ່ນ: ແຂມຄືກັນ ກັບເຂດຫ້ວຍຊີງ, ນອກຈາກນີ້ແລ້ວຍັງມີຍັງມີຊະນິດອື່ນໆອີກເຊັ່ນ: ໝາກປີ, ປໍສາ, ໜໍ່ໄມ້ຫົກ, ໜໍ່ໄມ້ບົງ, ໜໍ່ໄມ້ຊາງ, ປູ, ປາ, ຫອຍ, ກົບ-ຂຽດ.

ເຂດຫ້ວຍຈະລອງ

ຫ່າງຈາກບ້ານປະມານ 3 ຊົ່ວໂມງ, ເຄື່ອງປ່າຂອງດົງຢູ່ໃນເຂດນີ້ແມ່ນ ຄືກັນກັບ ເຂດຫ້ວຍຊີງ ແລະ ເຂດຫ້ວຍລຸມ, ນອກຈາກນີ້ແລ້ວຍັງ ມີຊະນິດອື່ນໆອີກເຊັ່ນ: ໜໍ່ໄມ້ຫົກ, ໜໍ່ໄມ້ບົງ, ໜໍ່ໄມ້ຊາງ, ປູ, ປາ, ຫອຍ, ກົບ-ຂຽດ.

ຖ້າທຽບລະຫວ່າງ 3 ເຂດແລ້ວເຫັນວ່າເຂດຫ້ວຍຊີງມີຜະລິດຕະພັນເຄື່ອງປ່າຂອງດົງ ຫລາຍ ກ່ອນ, ເນື່ອງຈາກວ່າເຂດດັ່ງກ່າວແມ່ນເຂດທີ່ປະຊາຊົນພາຍໃນບ້ານມັກໄປຫາຫຼາຍກ່ອນເຂດອື່ນ, ສ່ວນເຂດຫ້ວຍລຸມ ແລະ ເຂດ ຫ້ວຍຈະລອງ ແມ່ນຢູ່ຫ່າງໄກຈາກບ້ານ ແລະ ບໍ່ມີເຄື່ອງ ປ່າຂອງ ດົງ ຫຼາຍ.

ບ້ານກົ່ວຕະລຸບII

ເຂດທີ່ປະຊາຊົນມັກໄປເກັບເຄື່ອງປ່າຂອງດົງມີຢູ່ 4 ເຂດຄື:

ເຂດພູແມ່ດາວ

ຫ່າງຈາກບ້ານປະມານ 1 ຊົ່ວໂມງ, ມີເຄື່ອງປ່າຂອງດົງຫຼາຍຊະນິດທີ່ມີໃນເຂດນີ້ເຊັ່ນ: ແຂມ, ປໍສາ, ໜໍ່ຫົກ, ເຫັດສະນຸ້ນ, ເຫັດຫູາດ ,ຜະລິດຕະພັນທີ່ມີຫຼາຍໃນ ເຂດນີ້ແມ່ນ ແຂມ, ຮອງລົງມາແມ່ນ ໜໍ່ຫົກ ແລະ ປໍສາ.

ເຂດຫ້ວຍເຊາະ

ຫ່າງຈາກບ້ານປະມານ 30ນາທີ, ມີເຄື່ອງປ່າຂອງດົງຫຼາຍຊະນິດທີ່ມີໃນເຂດນີ້ເຊັ່ນ: ແຂມ, ປໍສາ ແລະ ປູ. ຜະລິດຕະພັນທີ່ມີຫຼາຍໃນ ເຂດນີ້ແມ່ນ ແຂມ, ຮອງລົງມາແມ່ນ ປູ ແລະ ປໍສາ.

ເຂດສັນພູຫ້ວຍຮ່າວ

ຫ່າງຈາກບ້ານປະມານ 1ຊົ່ວໂມງ, ມີເຄື່ອງປ່າຂອງດົງຫຼາຍຊະນິດທີ່ມີໃນເຂດນີ້ເຊັ່ນ: ແຂມ, ປໍສາ ໜໍ່ຊາງ, ໝາກລິນໄມ້, ເຫັດຊາງ, ເຫັດຄົນ, ເຫັດບີ ແລະ ໝາກປີປ່າ. ຜະລິດຕະພັນທີ່ມີຫຼາຍໃນ ເຂດ ນີ້ແມ່ນ ໜໍ່ຊາງ, ຮອງລົງມາແມ່ນ ແຂມ ແລະ ປໍສາ.

<u>ເຂດຫ້ວຍພັດ</u>

ຫ່າງຈາກບ້ານປະມານ 1,30 ຊົ່ວໂມງ, ມີເຄື່ອງປ່າຂອງດົງຫຼາຍຊະນິດທີ່ມີໃນເຂດນີ້ເຊັ່ນ: ແຂມ, ປໍສາ ໝໍ່ຊາງ, ໝາກລີນໄມ້, ເຫັດຊາງ, ປູ, ເຫັດບີ້, ໝາກແຟນ, ປາ ແລະ ໝາກປີປ່າ. ຜະລິດຕະພັນທີ່ມີ ຫຼາຍໃນເຂດນີ້ແມ່ນ ໜໍ່ຊາງ, ຮອງລົງມາແມ່ນ ແຂມ ແລະ ປໍສາ.

ເຂດທີ່ມີເຄື່ອງປ່າຂອງດົງຫຼາຍກວ່າໝູ່ແມ່ນ ເຂດພູແມ່ດາວ ຍ້ອນວ່າເຂດນີ້ແມ່ນ ມີເຄື່ອງປ່າຂອງດົງ ຫຼາຍມາແຕ່ດັ່ງເດີມ ແລະ ຄົນກໍ່ມັກໄປຫາແຕ່ເຂດນີ້ເປັນສ່ວນຫຼາຍ.

## 4. <u>ລະດູການ</u> <u>ຜະລິດ</u>

ບ້ານ ນ້ຳມີ່ງ ແລະ ບ້ານ ກິ່ວຕະລຸນII ການຜະລິດທາງດ້ານ ກະສິກຳແມ່ນມີຫຼາຍເຊັ່ນ: ເຮັດໄຮ່ເປັນອາຊີບຫຼັກ ຂອງຄອບຄົວ, ຮອງລົງມາແມ່ນເຮັດສວນ (ຖົ່ວດິນ, ຖົ່ວຂຽວ, ສາລີ, ຜັກ, ໝາກເດືອຍ, ໝາກງາ) ແລະການບໍລິການອື່ນໆ, ສຳລັບຊ່ວງການເກັບເຄື່ອງປ່າຂອງດົງ ແມ່ນຊ່ວງທີ່ຫວ້າງວຽກຂອງຊາວກະສິກອນເທົ່ານັ້ນ.

| ລ/ດ | ກິດຈະກຳ | ເດືອນ | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| | | 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 |
| | <u>**ບ້ານ ນ້ຳມີ່ງ**</u> | | | | | | | | | | | | |
| 1 | ເຮັດໄຮ່ | ກະກຽມດິນ | | | | | ສັກເຂົ້າ | | ບົວລະບັດ | | | ເກັບກ່ຽວ | |
| 2 | ສວນຖົ່ວເຫຼືອງ+ໝາກງາ | ກະກຽມດິນ | | | | ປູກ | | ບົວລະບັດ | | ເກັບກູ້ | | | |
| 3 | ສວນໝາກຟັກ | ກະກຽມດິນ | | | | ປູກ | | ບົວລະບັດ | | ເກັບກູ້ | | | |
| 4 | ສວນໝາກເດືອຍ | ກະກຽມດິນ | | | | ປູກ | | ບົວລະບັດ | | | | ເກັບກູ້ | |
| 5 | ສວນແຂມ | ກະກຽມດິນ | | | | ປູກ | | ບົວລະບັດ (ເກັບກູ້ແມ່ນເດືອນ 12-2 ຂອງປີໃໝ່) | | | | | |
| 6 | ສວນປໍສາ | ກະກຽມດິນ | | | | ປູກ | | ບົວລະບັດ(ເກັບກູ້ແມ່ນເດືອນ 2-5 ຂອງປີທີ 3) | | | | | |
| | <u>**ບ້ານ ກິ່ວຕະລຸນ**</u> | | | | | | | | | | | | |
| 7 | ເຮັດໄຮ່ | ກະກຽມດິນ | | | | | ສັກເຂົ້າ | | ບົວລະບັດ | | | ເກັບກ່ຽວ | |
| 8 | ສວນສາລີ | ກະກຽມດິນ | | | | ປູກ | | ເສຍຫຍ້າ | ເກັບກູ້ | | | | |
| 9 | ສວນໝາກແຕງ | ກະກຽມດິນ | | | | | ປູກ | | ເສຍຫຍ້າ | ເກັບກູ້ | | | |
| 10 | ສວນໝາກງາ | ກະກຽມດິນ | | | | ປູກ | ບົວລະບັດ | | | ເກັບກູ້ | | | |

| | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| 11 | ສວນກ້ວຍ | ກະກຽມດິນ ←→ | | | ປູກ ←→ | ບົວລະບັດ (ປີທີ 2 , ເດືອນ 12 ຈຶ່ງເກັບກູ້) ←→ | | | | | | | |
| 12 | ສວນແຂມ | ກະກຽມດິນ ←→ | | | ປູກ ←→ | | | ບົວລະບັດ ((ເກັບກູ້ແມ່ນເດືອນ 12-4 ຂອງປີໃໝ່) ←→ | | | | | |
| 13 | ສວນປໍສາ | ກະກຽມດິນ ←→ | | | | ປູກ ←→ | | | ບົວລະບັດ(ເກັບກູ້ແມ່ນເດືອນ 2-5 ຂອງ 3) ←→ | | | | |
| 14 | ໜໍ່ໄມ້ຊາງ | | | | | | | | ←→ | ←→ | ←→ | | |
| 15 | ໜໍ່ໄມ້ຫົກ | | | | | | | | ←→ | ←→ | ←→ | | |
| 16 | ໝາກປີ | ←→ | ←→ | ←→ | ←→ | ←→ | ←→ | ←→ | ←→ | ←→ | ←→ | ←→ | ←→ |

ກິດຈະກຳທີ່ຊາວກະສິກອນໄດ້ເຮັດໃນປີໜຶ່ງແມ່ນປະກອບມີຫຼາຍກິດຈະກຳເຊັ່ນ: ເຮັດໄຮ່ເຂົ້າ, ເຮັດສວນ (ສວນສາລີ, ສວນໝາກແຕງ, ສວນໝາກງາ, ສວນກ້ວຍ, ສວນແຂມ, ສວນປໍສາ), ສຳລັບເວລາເກັບເຄື່ອງ ປ່າຂອງດົງມາຂາຍແມ່ນຖືກຊ່ວງທຳການຜະລິດຂອງຊາວກະສິກອນເຊັ່ນ: ເດືອນ12-4 ເກັບແຂມ, ເດືອນ 2-5 ເກັບປໍສາ, ເດືອນ 8-10 ເກັບໜໍ່ຊາງ , ໜໍ່ຫົກ ແລະ ເກັບໝາກປີແຕ່ເດືອນ 1-12.

## 5. ລະດູການອາຫານ

ອາຫານທີ່ຊາວກະສິກອນກິນທຸກມື້ສ່ວນຫຼາຍແມ່ນຫາຈາກປ່າທຳມະຊາດແຕ່ລະຊະນິດແມ່ນເກີດໃນລະດູການທີ່ແຕກຕ່າງກັນໄປແຕ່ລະໄລຍະໃນຮອບໝູນວຽນປີໜຶ່ງແລະ ບາງຊະນິດກໍ່ອອກໃນຊ່ວງເດືອນດຽວກັນ ລາຍລະອຽດຊື່ຜະລິດຕະພັນ ແລະ ລະດູການ ແມ່ນ ຢູ່ ໃນຕາຕະລາງລຸ່ມນີ້:

| ລ/ດ | ຊະນິດອາຫານ | ເດືອນ | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| | | 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 |
| 1 | ໝາກປີປ່າ | nnn k | nnn k | nnn k | nnn k | nnn k | nnn k | nnn k | nnn k | nnn kkk | nnn kkk | nnn k | nnn k |
| 2 | ຜັກກູດນ້ຳ | n kk | n kk | n k | nn | nn | nn | n | n | n | n | n | n k |
| 3 | ຜັກເນົ່າ | | | kk | n kkk | n kkk | N | nn | nnn | nnn | nn | nn | |
| 4 | ຜັກກູດໄຮ່ | | | | | n | nnn k | nn kk | kk | | | | |
| 5 | ໃບບອນ | k | kk | kk | k | k | | | | | | | |
| 6 | ຜັກຫວານ | | | k | n kk | nnn k | nnn | n | n | | | | |
| 7 | ຜັກໜອກ | n | n | n | n | n | n | n | n | n | n | n kk | n kk |
| 8 | ຜັກຮາກ | | | k | kk | | | | | | | | |
| 9 | ໜໍ່ບົງ | | | | | | | n | nnn k | n kkk | | | |
| 10 | ໜໍ່ຊາງ | | | | | n | n | nnn | nnn k | n kkk | n | | |
| 11 | ໜໍ່ຫົກ | | | | | | | n | nnn k | n kkk | | | |
| 12 | ໜໍ່ຫວານ | | | | | | | | | k | kkk | | |

| | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| 13 | ເຫັດປວກ | | | | | | nnn<br>k | nnn<br>kkk | kkk | | | | |
| 14 | ເຫັດຄົນ | | | | | | | nnn | n<br>kk | kk | | | |
| 15 | ເຫັດຊາງ | | | | | | | nnn | nnn | nnn<br>kk | kkk | | |
| 16 | ເຫັດໜອດ | | | | | | | nnn | nnn | nnn<br>k | kk | | |
| 17 | ເຫັດບີ້ | | | | | | | n | nnn | n<br>kk | kkk | | |
| 18 | ເຫັດຫາດ | | | | | | | | nnn<br>k | nn<br>kk | | | |
| 19 | ເຫັດສະນຸ່ນ | n | n | n | n | n | nn | nnn | nnn<br>k | n<br>kk | n | n | n |
| 20 | ເຫັດເຫືອກ | n | n | n | n | n | nn | nnn | nnn | n | n | n | n |
| 21 | ເຫັດໂຄກ | | | | | | | | nnn | nn | | | |
| 22 | ເຫັດໄຂ່ | | | | | | | | nnn | nn | | | |
| 23 | ເຫັດເພາະ | | | | | | | | nn | n | | | |
| 24 | ດອກແຄ | n<br>kk | kk | | | | | | | | | | nnn |
| 25 | ໝາກລີ້ນໄມ້ | | | | | | | | nnn | n<br>k | kkk | | |
| 26 | ດອກບານ | | | n<br>k | n<br>kk | | | | | | | | |
| 27 | ຜັກຕັງແກວ(ຫຍ້າເຮືອບິນ) | n | n | n | n | n | n | n | n | n | n | n | n |
| 2 | ຜັກໜັງ | | | | n | nn | nn | n | n | | | | |
| 29 | ຜັກກາດຮອງ | n | n | n | n | n | n | n | n | n | n | n | n |
| 30 | ຜັກຫາກ | | | | n | nnn | nnn | n | n | | | | |
| 31 | ປາ | nnn<br>k | nnn<br>k | nnn<br>k | nn<br>kk | nn<br>kk | n<br>k | n<br>k | n | n | n | n | n<br>k |
| 32 | ປູ | n<br>k | n<br>k | n<br>k | n<br>k | n<br>k | n<br>k | n<br>k | nnn<br>k | nnn<br>k | n<br>k | n<br>kkk | n |
| 33 | ກົບ-ຂຽດ | | | | | | | | k | kk | | | |
| 34 | ກຸ້ງ | nnn<br>k | nnn<br>k | nn<br>k | n<br>kk | n<br>kk | n | nnn | nnn | n | n | n | n |
| 35 | ຫອຍ | n | n | n | n<br>kk | n<br>kk | n | n | nnn | nnn | | | |
| 36 | ຕຸ່ນ | | | | kk | kk | | | | | | | |
| 37 | ອົ້ນ | k | | | | | | | | | | | |
| 38 | ແອ | | | | | | | | | | nnn<br>k | nnn<br>kk | k |
| 39 | ໝູ | n<br>k | n<br>k | n<br>k | n<br>k | n<br>k | n<br>k | n<br>k | n<br>k | n<br>k | nn<br>k | nn<br>k | nn<br>kk |
| 40 | ນົກ | k | k | k | k | k | k | k | k | k | k | k | kk |

**ເຄື່ອງໝາຍ ແລະ ສັນຍາລັກ:**

n : ບ້ານ ໝາ້ ມີ່ງ

k : ບ້ານ ກົ່ວຕະລຸມ

n, k : ແມ່ນ ມີໜ້ອຍ

nn, kk : ແມ່ນ ມີພໍຢູ່ພໍກິນ

nnn, kkk : ແມ່ນ ມີຫຼາຍເຫຼືອກິນຈົນໄດ້ຂາຍ

## 6. ລາຍຮັບ-ລາຍຈ່າຍ

ລາຍຮັບຂອງ ບ້ານ ນ້ຳມິ່ງ 284.400.000 ກີບ




ລາຍຮັບຂອງ ບ້ານ ກິ່ວຕະລຸນ II 305.100.000 ກີບ




ລາຍຮັບເຄື່ອງປ່າຂອງດົງຂອງບ້ານນ້ຳມິ່ງ 47,000,000 ກີບ




ລາຍຮັບເຄື່ອງປ່າຂອງດົງຂອງ ບ້ານ ກິ່ວຕະລຸນ 62,000,000 ກີບ




ລາຍຮັບທີ່ສຳຄັນຂອງບ້ານ ນ້ຳມິ່ງ ສ່ວນໃຫຍ່ແມ່ນໄດ້ຈາກລາຍຮັບອື່ນໆ (ຂາຍ ເຄື່ອງຍ່ອຍ, ບໍລິການລົດໃຫຍ່, ຮັບຈ້າງກໍ່ສ້າງ) 42 % , ຮອງລົງມາແມ່ນໄດ້ຈາກຂາຍພືດກະສິກຳ (ເຂົ້າເປືອກ, ໝາກງາ, ໝາກຝັກ) ກວມ 32%, ສຳລັບລາຍຮັບທີ່ໄດ້ຈາກເຄື່ອງປ່າຂອງດົງກວມ 16 % ຂອງລາຍຮັບທັງໝົດ, ແຕ່ໃນນັ້ນຊະນິດທີ່ສ້າງລາຍຮັບຫຼາຍກ່ວາໝູ່ແມ່ນ ແຂມ ກວມຢູ່ 71% ແລະ ປໍສາ 14% ຂອງລາຍຮັບເຄື່ອງປ່າຂອງດົງທັງໝົດ.

ບ້ານ ກິ່ວຕະລຸນ II ລາຍຮັບທີ່ສຳຄັນກ່ວາໝູ່ແມ່ນໄດ້ຈາກການຂາຍພືດກະສິກຳເຊັ່ນ : (ໝາກແຕງ, ໝາກຝັກ, ໝາກກ້ວຍ) ກວມ 53% , ປະເພດທີ່ 2 ແມ່ນ ລາຍຮັບຈາກເຄື່ອງປ່າຂອງດົງ ກວມ 20% ຂອງລາຍຮັບທັງໝົດ, ໃນນັ້ນຊະນິດທີ່ໄດ້ລາຍຮັບຫຼາຍກ່ວາໝູ່ແມ່ນແຂມ ກວມ 61%, ຮອງລົງມາແມ່ນ ປໍສາກວມ 28% ຂອງລາຍຮັບເຄື່ອງປ່າຂອງດົງທັງໝົດ.

ເຄື່ອງປ່າຂອງດົງທັງ 2 ບ້ານເຫັນວ່າແຂມ ແລະ ປໍສາ ມີທ່າແຮງຫຼາຍກ່ວາໝູ່ໃນການສ້າງລາຍຮັບ ເນື່ອງຈາກວ່າທັງ 2 ຊະນິດແມ່ນມີຫຼາຍ ເພາະທັງປູກເອງໃນພື້ນທີ່ໄຮ່ ແລະ ເກັບຈາກປ່າທຳມະຊາດມາຂາຍ.

**ຕາຕະລາງລາຍຈ່າຍ**

| **ຊະນິດລາຍຈ່າຍ** | **ບ້ານນ້ຳມີ່ງ** | | **ບ້ານ ກິ່ວຕະລຸນII** | |
|---|---|---|---|---|
| | **ກີບ /ປີ** | **%** | **ກີບ/ປີ** | **%** |
| ເຂົ້າກິນ | 13.860.000 | 5.2 | 9.500.000 | 2.3 |
| ອາຫານ | 114.000.000 | 42.6 | 94.000.000 | 22 |
| ເຄື່ອງນຸ່ງຮົ່ມ | 114.000.000 | 42.6 | 141.000.000 | 34 |
| ເຄື່ອງໃຊ້ສອຍ | | | 75.200.000 | 18 |
| ຢາປົວພະຍາດ | 11.400.000 | 4.3 | 28.200.000 | 7 |
| ແນວພັນພືດ | 558.000 | 0.21 | 16.000.000 | 3.81 |
| ເສຍພາສີ | | | 9.000.000 | 2.14 |
| ລາຍຈ່າຍອື່ນໆ(ຄ່ານ້ຳ,ຄ່າໄຟ,ບັດເຊີນ) | 13.844.000 | 5.2 | 47.000.000 | 11.2 |
| **ລວມລາຍຈ່າຍ** | **267.662.000** | | **419.900.000** | |

ລາຍຈ່າຍຂອງຊາວກະສິກອນໃນປີໜຶ່ງສ່ວນໃຫຍ່ແມ່ນ: ຊື້ເຂົ້າກິນ, ອາຫານ, ເຄື່ອງນຸ່ງຮົ່ມ, ລາຍຈ່າຍອື່ນໆ (ຄ່ານ້ຳ, ຄ່າໄຟ, ບັດເຊີນ), ທັງ 2 ບ້ານຊະນິດລາຍຈ່າຍແມ່ນຄືກັນແຕກຕ່າງກັນແຕ່ທາງດ້ານຈຳນວນເຊັ່ນ:ບ້ານ ນ້ຳມີ່ງລາຍຈ່າຍທີ່ຫຼາຍກ່ວາໝູ່ແມ່ນ ຊື້ອາຫານ ແລະ ເຄື່ອງນຸ່ງຮົ່ມກວມ 42% ຂອງລາຍຈ່າຍທັງໝົດ, ສຳລັບບ້ານ ກິ່ວຕະລຸນ II ລາຍຈ່າຍທີ່ສຳຄັນກ່ວໝູ່ແມ່ນຊື້ເຄື່ອງນຸ່ງຮົ່ມກວມ 34%, ຮອງລົງມາແມ່ນຊື້ອາຫານກວມ22%

## 7. ມາດຖານການຄັດເລືອກຜະລິດຕະພັນເຄື່ອງປ່າຂອງດົງ

ສໍາລັບການຄັດເລືອກຜະລິດຕະພັນເຄື່ອງປ່າຂອງດົງທີ່ສໍາຄັນແມ່ນປະຊາຊົນເປັນຜູ້ຄັດເລືອກເອງ, ໂດຍການເລືອກເອົາຜະລິດຕະພັນທີ່ເປັນ ບຸລິມະສິດຂອງບ້ານທີ່ເປັນໄປໄດ້ສໍາລັບການພັດທະນາທັງໝົດນີ້ລ້ວນແລ້ວແຕ່ມີຄວາມສໍາຄັນ ສໍາລັບກິນ, ຂາຍ ແລະ ຊົມໃຊ້ ໂດຍອີງໃສ່ 4 ມາດຖານ ດັ່ງລຸ່ມນີ້:

**ບ້ານ ນໍ້າມິ່ງ**

| ລ/ດ | ຜະລິດຕະພັນ | **ການ**ຕະຫຼາດ | ຊັບພະຍາກອນ | ນະໂຍບາຍ<br>ຮີດຄອງປະເພນີ, **ເສດຖະກິດ-ສັງຄົມ** | ການປຸງແຕ່ງ ,ວິທີເກັບກູ້ **ແລະ ການຈັດສັນ** |
|---|---|---|---|---|---|
| 1 | ໜໍ່ໄມ້ຊາງ | - ຕະຫຼາດຕ້ອງການຫຼາຍ<br>- ລາຄາ1, 000 ກີບ/ກິໂລ | - ມີໜ້ອຍ<br>- ໄລຍະທາງ20 ນາທີ<br>- ລະດູການເກັບກູ້ 5-10 | - ມີການຫວງຫ້າມ<br>- ລາຍຮັບທັງໝົດຂອງບ້ານ 1.1 %<br>- ປະຊົນພາຍໃນບ້ານທີ່ໄປເກັບ 10%<br>- ຜູ້ຍິງເຂົ້າຮ່ວມໃນການເກັບມີ 50% | - ໃຊ້ພ້າຕັດເອົາແຕ່ລໍາທີ່ແກ່<br>- ຈັກສານ (ຕອກມັດຣົ້ວ, ສານແຕະ, ເຮັດເຂົ້າ ແລະ ອື່ນໆ) |
| 2 | ປາ | - ຕະຫຼາດຕ້ອງການຫຼາຍ | - ມີໜ້ອຍ<br>- ໄລຍະທາງ 10 ນາທີ<br>- ລະດູການແມ່ນ 1-12 | - ບໍ່ມີການຫວງຫ້າມແຕ່ຕ້ອງຫາກິນແບບທໍາມະຊາດ | - ໃຊ້ແຫ່,ມອງຫາ<br>- ປີ້ງ ແລະ ຂາຍດິບ |
| 3 | ໜໍ່ຫວາຍຂົມ | - ຕະຫຼາດບໍ່ຕ້ອງການຫຼາຍ | - ມີໜ້ອຍ<br>- ໄລຍະທາງ 1 ຊົ່ວໂມງ | - ບໍ່ມີການຫວງຫ້າມ | - ໃຊ້ພ້າຕັດເອົາຍອດແລະເຄືອ<br>- ຍອດຂາຍເປັນໜໍ່ດິບ, ສ່ວນເຄື່ອໃຊ້ເຮັດເຄື່ອງຫັດຖະກໍາເຊັ່ນ:ພາເຂົ້າຫວາຍ, ຕັ່ງຫວາຍ ແລະ ຂອບແອບເຂົ້າ |
| 4 | ແຂມ | - ຕະຫຼາດຕ້ອງການຫຼາຍ<br>- ລາຄາ 3,300 ກີບ/ກິໂລ | - ມີຫຼາຍ<br>- ໄລຍະທາງ 1-3 ຊົ່ວໂມງ<br>- ປະຊາຊົນເກັບ 10,000 ກິໂລ/ປີ<br>- ລະດູການເກັບກູ້ 12-2 | - ມີໂກຕາໃຫ້ແຕ່ລະປີ<br>- ລາຍຮັບທັງໝົດຂອງບ້ານ 11.60 %<br>- ປະຊົນພາຍໃນບ້ານທີ່ໄປເກັບ 90%<br>- ຜູ້ຍິງເຂົ້າຮ່ວມໃນການເກັບມີ 50% | - ໃຊ້ພ້າຕັດເອົາ<br>- ຕັດເອົາດອກແລ້ວມາຕາກແດດ1ມື້, ຫຼັງຈາກນັ້ນກໍ່ຟາດເອົາດອກຖິ້ມແລ້ວຈຶ່ງມັດຂາຍ |
| 5 | ປໍສາ | - ຕະຫຼາດຕ້ອງການຫຼາຍ | - ມີຫຼາຍ | - ມີໂກຕາໃຫ້ແຕ່ລະປີ | - ໃຊ້ພ້າຕັດຕົ້ນ |

| | | | | | |
|---|---|---|---|---|---|
| | | - ລາຄາ 3,200 ກີບ/ກິໂລ | - ໄລຍະທາງ 13 ຊົ່ວໂມງ<br>- ປະຊາຊົນເກັບ 2,000 ກິໂລ/ປີ<br>- ລະດູການເກັບກູ້ 2-5 | - ລາຍຮັບທັງໝົດຂອງບ້ານ 2.3 %<br>- ປະຊົນພາຍໃນບ້ານທີ່ໄປເກັບ 30%<br>- ຜູ້ຍິງເຂົ້າຮ່ວມໃນການເກັບມີ 20% | - ຂູດເປືອກອອກກໃຫ້ໝົ້ອນ, ຫຼັງຈາກນັ້ນ ລອກເອົາເປືອກມາຕາກແດດໃຫ້ແຫ້ງ |
| 6 | ໝາກປີປ່າ | - ຕະຫຼາດຕ້ອງການຫຼາຍ | - ມີໜ້ອຍ<br>- ໄລຍະທາງ 1 ຊົ່ວໂມງ<br>- ລະດູການເກັບກູ້ 1-12 | - ມີການຫວງຫ້າມ<br>- ລາຍຮັບທັງໝົດຂອງບ້ານ 0.53 %<br>- ປະຊົນພາຍໃນບ້ານທີ່ໄປເກັບ 30%<br>- ຜູ້ຍິງເຂົ້າຮ່ວມໃນການເກັບມີ 50% | - ໃຊ້ພ້າປ້ຳຕົ້ນ<br>- ຂາຍເປັນໜີວດິບ |
| 7 | ຟືນ | - ຕະຫຼາດຕ້ອງການໜ້ອຍ | - ມີຫຼາຍ<br>- ໄລຍະທາງ 15 ນາທີ | - ບໍ່ມີການຫວງຫ້າມ<br>- ຜູ້ຍິງເຂົ້າຮ່ວມໃນການເກັບມີ 20% | - ໃຊ້ພ້າ, ເລື່ອຍຕັດເປັນທ່ອນເພື່ອດັງໄຟ |
| 8 | ຫ້ຍາຄາ | - ຕະຫຼາດບໍ່ຕ້ອງການ | - ມີຫຼາຍ<br>- ໄລຍະທາງ 1 ຊົ່ວໂມງ | - ບໍ່ມີການຫວງຫ້າມ | - ໃຊ້ພ້າຫຼືກ່ຽວເອົາ<br>- ໄພເປັນຈ່າມເພື່ອມຸງເຮືອນ |
| 9 | ໄມ້ຈິງ | - ຕະຫຼາດບໍ່ຕ້ອງການ | - ມີຫຼາຍ<br>- ໄລຍະທາງ 5 ນາທີ | - ມີການຫວງຫ້າມ | - ພ້າຕັດເປັນລຳ<br>- ເຮັດເຮືອນ,ຮົ້ວ |
| 10 | ໃບຕອງ | - ຕະຫຼາດຕ້ອງການໜ້ອຍ | - ມີຫຼາຍ<br>- ໄລຍະທາງ 15 ນາທີ | - ບໍ່ມີການຫວງຫ້າມ | - ໃຊ້ພ້າຫຼືກ່ຽວເກາະເອົາ<br>- ໃຊ້ຫໍ່ອາຫານເຊັ່ນ: ເຮັດມົກ ແລະ ເຮັດພາຂັວນໃນງານບຸນຕ່າງຕ່າງ |
| 11 | ໜໍ່ໄມ້ຫົກ | - ຕະຫຼາດຕ້ອງການຫຼາຍ | - ມີໜ້ອຍ<br>- ໄລຍະທາງ 1 ຊົ່ວໂມງ | - ບໍ່ມີການຫວງຫ້າມ<br>- ລາຍຮັບທັງໝົດຂອງບ້ານ 1.1 % | - ຂາຍໜໍ່ດິບ<br>- ໃຊ້ສຽມຫຼືພ້າຂຸດເອົາ |

## <u>ບ້ານ ກົ່ວຕະລຸນ</u>

| **ລ/ດ** | ຜະລິດຕະພັນ | **ການ**ຕະຫຼາດ | ຊັບພະຍາກອນ | ນະໂຍບາຍ<br>ຮີດຄອງປະເພນີ, **ເສດຖະກິດ-ສັງຄົມ** | ການປຸງແຕ່ງ ,ວິທີເກັບກູ້ **ແລະ ການຈັດສັນ** |
|---|---|---|---|---|---|
| 1 | ປາ | - ຕະຫຼາດຕ້ອງການຫຼາຍ | - ມີໜ້ອຍ<br>- ໄລຍະທາງ 1.30 ຊົ່ວໂມງ | - ບໍ່ມີການຫວງຫ້າມ | - ໃຊ້ແຫ່,ມອງ<br>- ຂາຍດິບ |

| | | | | | |
|---|---|---|---|---|---|
| | | | - ລະດູການເກັບກູ້ 1-12 | | |
| 2 | ຜັກກູດນໍ້າ | - ຕະຫຼາດບໍ່ຕ້ອງການ | - ມີໜ້ອຍ<br>- ໄລຍະທາງ 1.30 ຊົ່ວໂມງ<br>- ລະດູການເກັບກູ້ 1-12 ແຕ່ມີຫຼາຍແມ່ນໃນຊ່ວງເດືອນ 12-3 | - ບໍ່ມີການຫວງຫ້າມ | - ໃຊ້ມືເດັດເອົາ<br>- ໃຊ້ເປັນອາຫານເຊັ່ນ: ແກງ ແລະ ຂົ້ວ |
| 3 | ໜູ | - ຕະຫຼາດຕ້ອງການຫຼາຍ | - ມີໜ້ອຍ<br>- ໄລຍະທາງ 30 ນາທີ | - ບໍ່ມີການຫວງຫ້າມ | - ໃສ່ກະທໍ້<br>-ໃຊ້ເປັນອາຫານເຊັ່ນ:ປີ້ງ ແລະ ເອາະຫຼາມ |
| 4 | ປູ | - ຕະຫຼາດຕ້ອງການຫຼາຍ | - ມີໜ້ອຍ<br>- ໄລຍະທາງ 30 ນາທີ | - ບໍ່ມີການຫວງຫ້າມ | - ໃຊ້ສຸ່ມຊຸດເອົາ<br>- ໃຊ້ເປັນອາຫານເຊັ່ນ: ຕຳແຈ່ວ, ມົກ |
| 5 | ແຂມ | - ຕະຫຼາດຕ້ອງການຫຼາຍ<br>- ລາຄາ 2, 500 ກີບ/ກິໂລ | - ມີໜ້ອຍ<br>- ໄລຍະທາງ 1 ຊົ່ວໂມງ<br>- ປະຊາຊົນເກັບ 15,000 ກິໂລ/ປີ<br>- ລະດູການເກັບກູ້ 1-12 | - ບໍ່ມີການຫວງຫ້າມ<br>- ລາຍຮັບທັງໝົດຂອງບ້ານ 12.29 %<br>- ປະຊົນພາຍໃນບ້ານທີ່ໄປເກັບ 100 %<br>- ຜູ້ຍິງເຂົ້າຮ່ວມໃນການເກັບມີ 50% | - ໃຊ້ພ້າຕັດຕົ້ນ<br>- ຕາກໃຫ້ແຫ້ງຝາດເອົາດອກອອກແລ້ວມັດຂາຍ |
| 6 | ປໍສາ | - ຕະຫຼາດຕ້ອງການຫຼາຍ<br>- ລາຄາ 2, 500 ກີບ/ກິໂລ | - ມີໜ້ອຍ<br>- ໄລຍະທາງ 1 ຊົ່ວໂມງ<br>- ປະຊາຊົນເກັບ 7,000 ກິໂລ/ປີ<br>- ລະດູການເກັບກູ້ 2-5 | - ບໍ່ມີການຫວງຫ້າມ<br>- ລາຍຮັບທັງໝົດຂອງບ້ານ 5.74 %<br>- ປະຊົນພາຍໃນບ້ານທີ່ໄປເກັບ 100 %<br>- ຜູ້ຍິງເຂົ້າຮ່ວມໃນການເກັບມີ 50% | - ໃຊ້ພ້າຕັດຕົ້ນ<br>- ລອກແລ້ວຕາກແດດ |
| 7 | ໜໍ່ໄມ້ຊາງ | - ຕະຫຼາດຕ້ອງການຫຼາຍ<br>- ລາຄາ 1, 000 ກີບ/ກິໂລ | - ມີຫຼາຍ<br>- ໄລຍະທາງ 1 ຊົ່ວໂມງ<br>- ປະຊາຊົນເກັບ 5,000 ກິໂລ/ປີ<br>- ລະດູການເກັບກູ້ 8-9 | - ບໍ່ມີການຫວງຫ້າມ<br>- ລາຍຮັບທັງໝົດຂອງບ້ານ 1.64 %<br>- ປະຊົນພາຍໃນບ້ານທີ່ໄປເກັບ 80 %<br>- ຜູ້ຍິງເຂົ້າຮ່ວມໃນການເກັບມີ 40% | - ໃຊ້ສຽມ,ພ້າຊຸດ<br>- ຂາຍເປັນໜໍ່ດິບ |
| 8 | ໜໍ່ໄມ້ຫົກ | - ຕະຫຼາດຕ້ອງການຫຼາຍ<br>- ລາຄາ 1, 000 ກີບ/ກິໂລ | - ມີໜ້ອຍ<br>- ໄລຍະທາງ 1 ຊົ່ວໂມງ | ມີການຫວງຫ້າມ<br>- ລາຍຮັບທັງໝົດຂອງບ້ານ 0.66 % | - ໃຊ້ສຽມ,ພ້າຊຸດ<br>- ຂາຍໜໍ່ດິບ |

| | | | | | |
|---|---|---|---|---|---|
| | | | - ປະຊາຊົນເກັບ 2,000 ກິໂລ/ປີ<br>- ລະດູການເກັບກູ້ 8-9 | - ປະຊົນພາຍໃນບ້ານທີ່ໄປເກັບ 10 %<br>- ຜູ້ຍິງເຂົ້າຮ່ວມໃນການເກັບມີ 5% | |
| 9 | ໄມ້ຊາງ | - ຕະຫຼາດຕ້ອງການຫຼາຍ | - ມີໜ້ອຍ<br>- ໄລຍະທາງ 1 ຊົ່ວໂມງ | ມີການຫວງຫ້າມ | - ພ້າຕັດເປັນລຳ<br>- ເຮັດເຮືອນ,ຮົ້ວ |
| 10 | ໄມ້ຈິງ(ຟືນ) | - ຕະຫຼາດບໍ່ຕ້ອງການ | - ມີໜ້ອຍ<br>- ໄລຍະທາງ 30 ນາທີ | ມີການຫວງຫ້າມ | - ເລື່ອຍ,ພ້າຕັດ<br>- ຕັດເປັນທ່ອນ |
| 11 | ຫຍ້າຄາ | - ຕະຫຼາດຕ້ອງການໜ້ອຍ | - ມີໜ້ອຍ<br>- ໄລຍະທາງ 1 ຊົ່ວໂມງ | ບໍ່ມີການຫວງຫ້າມ | ໃຊ້ກ່ຽວເກາະ<br>ໄພເປັນຈ່າມເພື່ອມຸງເຮືອນ |
| 12 | ໄມ້ບົງ | - ຕະຫຼາດຕ້ອງການຫຼາຍ | - ມີຫຼາຍ<br>- ໄລຍະທາງ 1 ຊົ່ວໂມງ | ມີການຫວງຫ້າມ | - ໃຊ້ພ້າຕັດ<br>- ຈັກສານ |
| 13 | ໃບຕອງ | - ຕະຫຼາດບໍ່ຕ້ອງການ | - ມີຫຼາຍ<br>- ໄລຍະທາງ 1 ຊົ່ວໂມງ | ບໍ່ມີການຫວງຫ້າມ | - ໃຊ້ພ້າຕັດ<br>- ຫໍ່ອາຫານ |

## 8. ການວິເຄາະບັນຫາ

ຊາວກະສິກອນທັງ 2 ບ້ານໄດ້ຄັດເລືອກເອົາຜະລິດຕະພັນທີ່ເປັນບຸລິມະສິດຂອງບ້ານ ຄືກັນເຊັ່ນ: ແຂມ ແລະ ປໍສາ, ຊະນິດທີ່ແຕກຕ່າງແມ່ນ ໝາກປີປ່າ, ຊາວກະສິກອນເລືອກເອົາຜະລິດຕະພັນ ດັ່ງກ່າວ ເນື່ອງຈາກວ່າ ໄດ້ສ້າງລາຍຮັບເຂົ້າບ້ານ ຫຼາຍກ່ວາໝູ່ , ຕະຫຼາດມີຄວາມຕ້ອງການ, ລາຄາດີ, ຊັບພະຍາກອນກໍ່ມີພຽງພໍກັບ ຄວາມຕ້ອງການຂອງຕະຫຼາດ, ພັກ-ລັດບໍ່ມີການຫວງຫ້າມສາມາດ ເກັບໄດ້ທັງຍິງ ແລະ ຊາຍ, ໄລຍະທາງກໍ່ບໍ່ໄກ, ດັ່ງນັ້ນຈຶ່ງຄັດເລືອກຜະລິດຕະພັນດັ່ງກ່າວເພື່ອມາຊອກບັນຫາ, ສາເຫດ ແລະ ວິທີແກ້ໄຂບັນຫາດັ່ງໃນ ຕາຕະລາງລຸ່ມນີ້:

### ບ້ານ ນ້ຳມີ່ງ

| ລ/ດ | ຜະລິດຕະພັນ | ຊະນິດບັນຫາ | ສາເຫດ | ວິທີແກ້ໄຂ |
|---|---|---|---|---|
| 1 | ແຂມ | - ເກັບກູ້ຍາກ<br>- ເລືອກພື້ນທີ່ເກີດດິນບໍ່ງສມ | - ພື້ນທີ່ຊັນ, ຄາຍ,ຕິບ<br>- ແຂມບໍ່ມັກເກີດຢູ່ບ່ອນຮົ່ມ ແລະ ບ່ອນທີ່ມີຕົ້ນໄມ້ ໃຫຍ່ | - ຄ່ອຍຕັດເທື່ອລະຕົ້ນ<br>- ປູກເສີມໃສ່ໃນພື້ນທີ່ຂອງຕົນເອງ ເພື່ອບົວລະບັດຮັກສາສະດວກ |
| 2 | ປໍສາ | - ປໍສາຕິດແກນ(ລອກຍາກ)<br>- ປູກບໍ່ຖືກລະດູ (ແຫ້ງແລ້ງ) ເຮັດໃຫ້ປໍສາບໍ່ຂຶ້ນ | - ເກັບກູ້ບໍ່ຖືກລະດູການ<br>- ຝົນບໍ່ຕົກ | - ຖ້າກາຍລະດູການຕ້ອງປະໄວ້ໃຫ້ ໃບປົ່ງໃໝ່, ມີໝາກ ແລະ ດອກອອກ ຈຶ່ງຄ່ອຍ ເກັບກູ້<br>- ຕ້ອງປູກໃຫ້ຖືກຕາມລະດູການຄື (ເດືອນ6 -7 ) |
| 3 | ໝາກປີປ່າ | - ທາງໄປປ່າກ້ອຍຕີບ | - ເກີດຕາມປ່າເຫຼົ່າ, ຕາມ ລ້ອງຫ້ວຍ | - ຊ່ວຍກັນຖາງທາງບ່ອນທີ່ຈະໄປເອົາ ໃຫ້ກ້ຽງດີ |

### ບ້ານ ກິ່ວຕະລຸນII

| ລ/ດ | ຜະລິດຕະພັນ | ຊະນິດບັນຫາ | ສາເຫດ | ວິທີແກ້ໄຂ |
|---|---|---|---|---|
| 1 | ແຂມ | - ມີໜ້ອຍ<br><br>- ເກັບກູ້ຍາກ<br>- ດິນບໍ່ດີ | - ບໍ່ມີການປູກເສີມ, ບໍ່ອານາໄມພື້ນທີ່ບ່ອນທີ່ມີ ແຂມ ແລະ ບໍ່ຈູດປ່າ<br>- ດອກນ້ອຍ, ກ້ານສັ້ນ<br>- ເລືອກພື້ນທີ່ | - ຕ້ອງຈູດປ່າເພາະວ່າແຂມຖ້າຫາກອາຍຸກາຍ 2 ປີ ແຂມກໍ່ຈະຕາຍຫຼາຍ,ຕົ້ນນ້ອຍ ບໍ່ງາມ<br>- ຕ້ອງອານາໄມ,ບົວລະບັດຮັກ<br>- ຄັດເລືອກພື້ນທີ່ປູກ ຫຼື ຈູດ |
| 2 | ປໍສາ | - ລອກຍາກ,ບໍ່ງາມ<br>- ຄຸນນະພາບບໍ່ດີ<br><br><br>- ມີໜ້ອຍ | - ເລືອກດິນເກີດ<br>- ຕາກບໍ່ແຫ້ງດີ ແລະ ລອກເປືອກອອກບໍ່ໝົດ<br>- ປໍສາມີ ອາຍຸແກ່ໂພດ<br>- ບໍ່ມີການປູກເສີມ | - ຄັດເລືອກດິນທີ່ຈະປູກ<br>- ຕາກໃຫ້ແຫ້ງ,ລອກເປືອກນອກອອກໃຫ້ໝົດ<br><br>- ບໍ່ປະໃຫ້ມັນແກ່ໂພດ<br>- ປູກເສີມໃສ່ໃນພື້ນທີ່ຂອງຕົນເອງ |

## 9. ການສຳຫຼວດພື້ນທີ່ປ່າ

ລັກສະນະລວມຂອງພື້ນທີ່ປ່າທັງ 2 ບ້ານແມ່ນມີລັກສະນະຄ້າຍຄືກັນຄືເປັນປ່າເລົ່າຍ້ອນ ວ່າທັງສອງບ້ານມີຊາຍແດນຕິດຕໍ່ກັນ, ລັກສະນະດິນເປັນດິນດານແຂງສີເຫຼືອງແຕ່ພັດ ມີຄວາມຊຸ່ມ ເຢັນບາງ ບ່ອນກໍ່ມີຫີນກາບ ປົນ, ຢູ່ເຂດນີ້ຕົ້ນໄມ້ໃຫຍ່ຈະບໍ່ມີຫຼາຍເນື່ອງຈາກວ່າທັງສອງ ບ້ານຕັ້ງ ຢູ່ເຂດເນີນສູງ ບໍ່ມີທີ່ງພຽງພໍທີ່ຈະ ເຮັດນາໄດ້ດັ່ງນັ້ນ, ເຂົາຈິ່ງຢຶດຖືກອາຊີບເຮັດໄຮ່ເປັນຕົ້ນຕໍ ເປັນສາຍ ເຫດທີ່ເຮັດ ໃຫ້ປ່າທີ່ເຄີຍເປັນປ່າດົງມາກ່ອນ ກາຍມາເປັນ ປ່າ ເລົ່າ ແລະ ບາງບ່ອນ ກໍ່ມີລັກສະນະ ເປັນທົ່ງຫ້ຍາຄາ ເຄື່ອງປ່າຂອງດົງທີ່ ເປັນ ສິນຄ້າທີ່ພົບເຫັນໃນ ເຂດນີ້ແມ່ນ : ແຂມ,ປໍສາ, ສ່ວນເຄືອງປ່າຂອງດົງທີ່ນຳມາບໍລິໂພກ ແລະ ນຳມາຊົມໃຊ້ ແມ່ນ ມີ ຫຼາຍຊະນິດຢູ່ເອ ກະສານ ຊ້ອນ ທ້າຍ(ໜ້າທີ່27-28)

***ສະພາບທົ່ວໄປຂອງ ເຄື່ອງປ່າຂອງດົງແຕ່ລະຊະນິດແມ່ນຄ້າຍຄືກັນທັງ 2 ບ້ານເຊັ່ນ :***

ປໍສາ:

ສາມາດເກີດຂື້ນເອງໄດ້ຕາມທຳມະຊາດບ່ອນດິນທີ່ມີຄວາມຊຸ່ມເຢັນ ແລະ ຕາມປ່າເລົ່າອ່ອນຄືປ່າທີ່ເຄີຍຖາງເຮັດໄຮ່ມາກ່ອນປີຕໍ່ມາປໍສາຈະຂະຫຍາຍອອກຫຼາຍກ່ວາເກົ່າມັນອອກຕາມ ຮາກຂອງຕົ້ນເກົ່າທີ່ມີຢູ່ໃນພື້ນທີ່ຢູ່ແລ້ວ

*ການຂະຫຍາຍພັນ*

ປໍສາຂະຫຍາຍພັນໄດ້ດ້ວຍແກ່ນ,ເຫົ້ງາ ແລະ ຮາກ ດັ່ງນັ້ນ ມັນຈິ່ງຂະຫຍາຍເອງໄດ້ໃນທຳມະຊາດທີ່ຜ່ານມາຊາວບ້ານກໍ່ເຄີຍປູກປໍສາປະສົມກັບຕົ້ນກ້ວຍເປັນສວນປູກຂອງຕົນເອງ(ປູກດ້ວຍເຫົ້ງາຢູ່ເຂດຫ້ວຍພັດ) ເພາະ ກ້ວຍ ໃຫ້ຄວາມຊຸ່ມແກ່ປໍສາໄດ້(ສວນຂອງພໍ່ເຖົ້າຄຳແພງບ້ານກິ່ວຕະລຸນII)

*ການເກັບກູ້*

ປໍສາທີ່ມີອາຍຸໄດ້ 8 ເດືອນຂື້ນໄປສາມາດໃຫ້ຜົນພະລິດໄດ້ແລ້ວ, ລະດູການທີ່ເໝາະສົມ ລຳລັບ ການເກັບກູ້ປໍສາ ແມ່ນຊ່ວງເດືອນ 2-5 ເພາະຊ່ວງນີ້ແມ່ນ ປໍສາຈະລອກງ່າຍ ຖ້າກາຍນີ້ໄປ ສາຈະຕິດແກນ ແລະ ລອກຍາກວິທີການເກັບແມ່ນໃຊ້ຜ້າຕັດເອົາແລ້ວລອກອອກຈາກແກນຢູ່ປ່າເມື່ອມາຮອດເຮືອນຈະລອກເປືອກບາງໆອອກອີກຕື່ມ, ຫຼັງຈາກນັ້ນກ່ອນຈະຂາຍຍັງຕ້ອງຕາກແດດໃຫ້ແຫ້ງກ່ອນ.

*ການຕະຫຼາດ*

ສຳລັບການຕະຫຼາດແມ່ນມີແມ່ຄ້າ,ພໍ່ຄ້າເຂົ້າມາເກັບຊື້ຢູ່ກັບບ້ານ, ການຄົມມະນາຄົມກໍ່ ສະດວກ ເນື່ອງ ຈາກ ວ່າ ທັງ 2 ບ້ານ ແມ່ນຢູ່ຕິດທາງລົດ, ສ່ວນລາຄາກໍ່ມີບັນຫາພຽງເລັກນ້ອຍຄື:

- ❖ ຊ່ວງກາງເດືອນ 2 ແລະ ເດືອນ 6 ລາຄາຈະແພງຄື 1 ກິໂລ/3, 500 ກີບ ເພາະຊ່ວງນີ້ແມ່ນປໍສາຫາກໍ່ເລີ່ມມີ ແລະ ປໍສາໄກ້ຈະໝົດ
- ❖ ຊ່ວງເດືອນ 4-5 ແມ່ນຊ່ວງໄລຍະທີ່ປໍສາມີຫຼາຍສະນັ້ນລາຄາຈະລົງຮອດ 2.000-2.500ກີບ/ກິໂລ ການຂື້ນລົງຂອງລາຄາສາແມ່ນບໍລິສັດເປັນຜູ້ກຳນົດອອກມາ

ແຂມ:

ແຂມແມ່ນເກີດເອງຕາມທຳມະຊາດໃນພື້ນທີ່ຂອງຊາວກະສິກອນ,ລັກສະນະພື້ນທີ່ເປັນປ່າເລົ່າແລະເປັນ ດິນປົນຫີນແຕ່ ດິນຕ້ອງມີຄວາມຊຸ່ມເຢັນ

*ການຂະຫຍາຍພັນ*

ແຂມແມ່ນຂະຫຍາຍພັນໄດ້ດ້ວຍເຫົ້ງາມັນສາມາດເກີດຂື້ນເອງຕາມທຳມະຊາດແລ້ວເຮົາໄປອານາໄມ ,ຈູດປີຕໍ່ມາມັນຈະແຕກໜໍ່ໃໝ່ຫຼາຍ,ໃຫຍ່,ງານແຂມທີ່ຜ່ານມາປະຊາຊົນກໍ່ໄດ້ປູກແຂມຄືຄອບຄົວຂອງນາງພິມພາຢູ່ ບ້ານນ້ຳມິ່ງເພີ່ນໄດ້ຂະຫຍາຍພື້ນທີ່ປູກແຂມໄດ້ປະມານ 2 ເຮັກຕາ

*ການເກັບກູ້*

ອາຍຸການເກັບກູ້ຂອງແຂມແມ່ນໜຶ່ງປີ.ມັນຈະເປັນຮອບວຽນຄື: ປີໜຶ່ງເກັບເທື່ອໜຶ່ງຖ້າໃນປີໜຶ່ງເຈົ້າບໍ່ເກັບມັນກໍ່ຈະແກ່ແລ້ວຕາຍໄປເອງແລ້ວມັນປົ່ງອອກໃນປີຕໍ່ໄປຊ່ວງທີ່ເກັບກູ້ແຂມແມ່ນເດືອນ 12-2 ວິທີການເກັບກູ້ແມ່ນໃຊ້ພ້າຕັດເອົາເປັນລຳແລ້ວຕາກແດດກັບທີເລີຍ.

ຕາກໃຫ້ມັນຮ້າວຈົນຟາດເອົາດອກອອກໃຫ້ລອັນໄດ້.

ຖ້າເປັນສວນຂອງຊາວບ້ານເອງແມ່ນໄດ້ມີການອານາໄມພື້ນທີ່ໄປພ້ອມ,

ຖ້າມີເວລາຫຼາຍຢູ່ປ່າບາງຄົນກໍ່ລິງາອອກ ເລີຍກັບມາບ້ານກໍ່ສາມາດ ຂາຍໄດ້ແລ້ວ, ຖ້າບໍ່ມີເວລາຫຼາຍກໍ່ມີແຕ່ຕາກແດດຟາດເອົາດອກອອກ ແລ້ວກັບ ບ້ານ ຈິ່ງປັບແຕ່ງໃຫ້ມັນເປັນລະບຽບແລ້ວຈິ່ງຂາຍ.

**<u>10. ຂໍ້ມູນຈາກສຳພາດຄອບຄົວຕົວຢ່າງໃນ</u> <u>3</u> <u>ລະດັບ</u> (ຮັ່ງມີ, ປານກາງ ແລະ ທຸກຈົນ)**

ນອກຈາກການສຳຫຼວດຂໍ້ມູນໝົດບ້ານແລ້ວ ຍັງໄດ້ສຳພາດ 3 ລະດັບຄອບຄົວຄື: ຮັ່ງມີ, ປານກາງ ແລະ ທຸກຈົນ, ເພື່ອຢາກຮູ້ເຖິງບົດບາດ ແລະ ຄວາມສຳຄັນທາງດ້ານລາຍຮັບຂອງເຄື່ອງປ່າຂອງດົງ ທີ່ມີຕໍ່ ຊີວິດ ການ ເປັນຢູ່ທັງ 3 ລະດັບຄອບຄົວດັ່ງລຸ່ມນີ້:

*ບ້ານ ນ້ຳມີ່ງ* *ບ້ານ ກິ່ວຕະລຸນII*

ຄອບຄົວຮັ່ງມີ







- ລາຍຮັບຂອງຄອບຄົວຮັ່ງມີທັງ 2 ບ້ານສ່ວນເຫັນວ່າມີຄວາມແຕກຕ່າງກັນ, ບ້ານ ນ້ຳມີ່ງລາຍຮັບທີ່ໄດ້ຫຼາຍກ່ວາໝູ່ແມ່ນ ໄດ້ຈາກການຂາຍຜົນຜະລິດກະສິກຳ (ໝາກງາ, ຖົ່ວເຫຼືອງ, ໝາກເດືອຍ) ກວມ 77%, ຮອງລົງມາແມ່ນໄດ້ຈາກການຂາຍ ເຄື່ອງປ່າຂອງດົງ (ແຂມ) ກວມ 19% ຂອງລາຍຮັບທັງໝົດ
- ສຳລັບຄອບຄົວຮັ່ງມີ ບ້ານ ກິ່ວຕະລຸນ II ລາຍຮັບທີ່ສູງກ່ວາໝູ່ແມ່ນໄດ້ຈາກການຂາຍ ຜົນຜະລິດກະສິກຳ (ເຂົ້າສານ, ໝາກແຕງ ແລະ ໝາກງາ) ກວມ 61 %, ປະເພດທີ່ 2 ແມ່ນໄດ້ຈາກລາຍຮັບອື່ນໆ (ຂາຍເຄື່ອງຍ່ອຍ) ກວມ 33%
- ເຄື່ອງປ່າຂອງດົງສຳລັບຄອບຄົວຮັ່ງມີທັງ 2 ບ້ານ ເຫັນວ່າ ລາຍຮັບທີ່ໄດ້ຈາກເຄື່ອງປ່າຂອງດົງ ບໍ່ມີຄວາມສຳຄັນປານບ້ານກິ່ວຕະລຸນ II, ເພາະສ່ວນໃຫຍ່ແມ່ນເຮັດກິດຈະກຳອື່ນຈຶ່ງບໍ່ມີເວລາຫວ່າງໄປເກັບເຄື່ອງປ່າຂອງດົງມາຂາຍ

ຄອບຄົວປານກາງ







ລາຍຮັບຂອງຄອບຄົວປານກາງທັງ 2 ບ້ານ ກິດຈະກຳແມ່ນຄືກັນສ່ວນໃຫຍ່ແມ່ນໄດ້ລາຍຮັບຈາກການຂາຍຜົນຜະລິດ ກະສິກຳ ແລະ ຂາຍເຄື່ອງປ່າຂອງ ດົງ ເຊັ່ນ: ຄອບຄົວປານກາງ ບ້ານ ນ້ຳມີ່ງ ລາຍຮັບ ຈາກການ ຂາຍຜົນຜະລິດກະສິກຳ( ໝາກເດືອຍ,ຖົ່ວເຫຼືອງ) ແມ່ນກວມ 50%, ສຳລັບລາຍ ຮັບເຄື່ອງ ປ່າຂອງດົງ (ແຂມ) ກວມ8% ຂອງລາຍຮັບທັງໝົດ, ສຳລັບລາຍຮັບບ້ານກິ່ວຕະລຸນ II ລາຍຮັບທີ່ໄດ້ ຈາກ ການ ຂາຍຜົນຜະ ລິດກະສິກຳ (ຖົ່ວເຫຼືອງ, ສາລີ, ໝາກແຕງ) ກວມ 91% ຂອງລາຍຮັບທັງໝົດ, ລາຍຮັບ ຈາກເຄື່ອງ ປ່າຂອງ ດົງມີພຽງສ່ວນໜ້ອຍເທົ່ານັ້ນ (ແຂມ, ປໍສາ) ກວມ 9% ຂອງລາຍຮັບທັງໝົດ

ຄອບຄົວທຸກຈົນ







- ສຳລັບລາບຮັບຂອງຄອບຄົວທຸກຈົນທັງ 2 ບ້ານເຫັນວ່າມີຄວາມສຳຄັນຫຼາຍເຊັ່ນ: ບ້ານ ນ້ຳມີ່ງ ລາຍຮັບທີ່ໄດ້ ຈາກເຄື່ອງປ່າຂອງດົງ (ໜໍ່ໄມ້, ໝາກປີປ່າ ແລະ ເຫັດນ້ຳໝາກ) ກວມ 52%, ສຳລັບບ້ານ ກົ່ວຕະລຸມ II ລາຍຮັບທີ່ໄດ້ຈາກເຄື່ອງປ່າຂອງດົງ (ປໍສາ, ໜໍ່ໄມ້) ກວມ 70% ຂອງລາຍຮັບທັງໝົດ
- ເຄື່ອງປ່າຂອງດົງທັງ 2 ບ້ານ ເຫັນວ່າມີຄວາມສຳຄັນຫຼາຍທັງ 2 ບ້ານເຫັວ່າມີລາຍຮັບກວມເປີເຊັນສູງກ່ວລາຍ ຮັບທັງໝົດ, ອາດຈະເປັນຍ້ອນບໍ່ມີກິດຈະກຳຫຼາຍ, ບໍ່ມີທຶນທຳການຜະລິດ ແລະ ບໍ່ມີພື້ນທີ່ທຳການຜະລິດ ຈຶ່ງອາໄສແຕ່ເກັບ ເຄື່ອງປ່າຂອງດົງມາເປັນອາຫານ ແລະ ສ້າງລາຍຮັບໃຫ້ແກ່ຄອບຄົວ

***(ລາຍຮັບ-ລາຍຈ່າຍ ປີ 2005)***

| ລ/ດ | ປະເພດຄອບຄົວ | ລາຍຮັບ | ລາຍຈ່າຍ | ສ່ວນທີ່ຍັງເຫຼືອ |
|---|---|---|---|---|
| | *ບ້ານ **ນ້ຳມີ່ງ*** | | | |
| 1 | **ຮັ່ງມີ** | 6.220.000 | 1.420.000 | *4.800.000* |
| 2 | ປານກາງ | 4,811,000 | 4,355,000 | *456.000* |
| 3 | ທຸກຈົນ | 280.000 | 450.000 | *-170.000* |
| | *ບ້ານ **ກົ່ວຕະລຸມ*** | | | |
| 1 | ຮັ່ງມີ | 52.800.000 | 31.150.000 | *21.650.000* |
| 2 | ປານກາງ | 5.250.000 | 2.936.000 | *2.314.000* |
| 3 | ທຸກຈົນ | 5.200.000 | 5.434.000 | *-234.000* |

- ສຳລັບລາຍຮັບສ່ວນຫຼາຍແມ່ນໄດ້ຈາກການຂາຍຜົນຜະລິດກະສິກຳ, ສັດລ້ຽງ, ຂາຍເຄື່ອງປ່າຂອງດົງ ແລະ ການບໍລິການອື່ນໆ, ແຕ່ວ່າມີພຽງແຕ່ຄອບຄົວຂອງຄົນຮັ່ງມີເທົ່າ**ນັ້ນ**ທີ່ໄດ້ລາຍຮັບຈາກການບໍລິການເຊັ່ນ: ການ**ຂາຍເຄື່ອງຍ່ອຍ ແລະ ແລ່ນລົດ**.
- **ສ່ວນ**ສາມລະດັບຄອບຄົວເຫັນວ່າມີຄວາມແຕກຕ່າງກັນທາງດ້ານ ລາຍຮັບ-ລາຍຈ່າຍ ຫຼາຍມີການ ຫຼຸດລົງ ຕາມລະດັບຄອບຄົວ.

# ສະຫຼຸບ

ຜ່ານການເກັບກຳຂໍ້ມູນ,ວິເຄາະ ແລະຂຽນບົດລາຍງານສາມາດຮູ້ໄດ້ເຖິງທ່າແຮງຂອງເຄື່ອງປ່າຂອງດົງທີ່ ມີຢູ່ພາຍໃນບ້ານຄື: ຮູ້ຄວາມສຳຄັນ, ລະດູການ,ການນຳໃຊ້ ແລະ ບົດບາດຂອງເຄື່ອງປ່າຂອງດົງຕໍ່ກັບກາດຳລົງຊີວິດຂອງປະຊາຊົນ.

***ການຈັດປະເພດຜະລິດຕະພັນທີ່ສຳຄັນ***

ການຈັດປະເພດແມານໄດ້ແບ່ງອອກເປັນ 3 ພາກສ່ວນຄື: ກິນ,ຂາຍ ແລະ ຊົມໃຊ້ ທັງ2ບ້ານເຫັນວ່າມີຄວາມແຕກຕ່າງກັນຄື:

| | | |
|---|---|---|
| o **ບ້ານນ້ຳມີ່ງ**: | ສຳຄັນລຳລັບກິນມີ: | ໜໍ່ໄມ້ຊາງ, ປາ ແລະ ໜໍ່ຫວາຍຂົມ |
| | ສຳຄັນລຳລັບຂາຍມີ | ແຂມ, ປໍສາ ແລະ ໝາກປີ |
| | ສຳຄັນລຳລັບຊົມໃຊ້ມີ | ຟືນ ແລະ ໄມ້ຊາງ |
| o **ບ້ານກິ່ວຕະລຸນII** | ສຳຄັນລຳລັບກິນ | ປາ, ຜັກກູດນ້ຳ ແລະ ໜູ |
| | ສຳຄັນລຳລັບຂາຍ | ແຂມ, ປໍສາ ແລະ ໜໍ່ຊາງ |
| | ສຳຄັນລຳລັບຊົມໃຊ້ມີ: | ຟືນ(ໄມ້ຈິງ) ແລະ ໄມ້ຊາງ |

***ດ້ານການຜະລິດກະສິກຳ***

ສຳລັບການຜະລິດກະສິກຳຂອງຊາວບ້ານໃນປີໜຶ່ງສ່ວນຫຼາຍແມ່ນການເຮັດ ໄຮ່ເຂົ້າ, ສວນ (ໝາກງາ,ເດືອຍ,ສາລີ,ໝາກແຕງ,ໝາກກ້ວຍ ແລະ ອື່ນໆ) ແລະ ການເກັບກູ້ເຄື່ອງປ່າຂອງດົງມາຂາຍ. ຊາວບ້ານເຂົ້າປ່າເພື່ອເກັບກູ້ເຄື່ອງປ່າຂອງດົງມາຂາຍແມ່ນຊ່ວງເດືອນ 1 ຫາເດືອນ 4 ເພາະເດືອນ 1 ເປັນຊ່ວງຫ່ວາງວຽກ ແລະ ເດືອນ 4 ເປັນຊ່ວງກະກຽມດິນເພື່ອເຮັດການຜະລິດ ມີແຕ່ວັນສິນເທົ່ານັ້ນທີ່ບໍ່ໄດ້ເຮັດວຽກເພາະວ່າເຮັດການຜະລິດຈົນໝົດປີ ບົດບາດໃນການນ້ຳໃຊ້ແຮງານຍິງແລະຜູ້ຊາຍແມ່ນຊໍາກັນ.

***ລະດູການອາຫານ***

ອາຫານທີ່ຊາວບ້ານກິນແຕ່ລະວັນສ່ວນຫຼາຍແມ່ນຜະລິດຕະພັນທີ່ນຳອອກມາຈາກປ່າເຊິ່ງມີກິນຕະຫຼອດປີມີຫຼາຍຊະນິດເຊັ່ນ: ໝາກປີປ່າ, ຜັກກູດນ້ຳ, ຜັກໜອກ, ບາງຊະນິດກໍ່ເກີດໃນໃນຊ່ວງໄລຍະສັ້ນລະດູການທີ່ແຕກຕ່າງກັນໃນຮອບວຽນປີໜຶ່ງເຊັ່ນ: ປະເພດເຫັດ(ເຫັດລົມ, ເຫັດສະໜຸ່ນ, ເຫັດບົ້ ແລະ ເຫັດປວກ ) ແລະ ໜໍ່ໄມ້(ໜໍ່ທົກ, ໜໍ່ຫວານ, ໜໍ່ບົງ ແລະ ໜໍ່ຊາງ)

***ລາຍຮັບ***

ລາຍຮັບທັງ2ບ້ານແມ່ນໄດ້ຈາກການຂາຍຜົນຜະລິດກາສິກຳ,ສັດລ້ຽງ,ເຄື່ອງປ່າຂອງດົງແລະລາຍຮັບອື່ນໆ ສະເລ່ຍລາຍຮັບທັງໝົດຂອງບ້ານ ນ້ຳມີ່ງ **284.400.000** ກີບ/ປີ/ບ້ານ , ໃນນັ້ນລາຍຮັບທີ່ໄດ້ຈາກເຄື່ອງປ່າຂອງດົງ ສະເລ່ຍ ແມ່ນ **47,000,000** ກີບ/ປີ/ບ້ານ, ແລະ ບ້ານ ກິ່ວຕະລຸນ II ສະເລ່ຍລາຍຮັບທັງໝົດແມ່ນ **305.100.000** ກີບ/ປີ/ບ້ານ, ສຳລັບລາຍຮັ້ບທີ່ໄດ້ຈາກເຄື່ອງປ່າຂອງດົງສະເລ່ຍແມ່ນ :**62,000,000** ກີບ/ປີ/ບ້ານ

*ລາຍຈ່າຍ*

ສ່ວນຫຼາຍແມ່ນໄດ້ຊື້: ເຂົ້າ, ອາຫານ, ເຄື່ອງນຸ່ງ, ເຄື່ອງໃຊ້ສອຍ, ຢາປົວພະຍາດ ,ແນວພັນພືດ,ສັດ, ເສຍພາສີ ແລະລາຍຈ່າຍອື່ນໆ(ຄ່ານ້ຳ,ຄ່າໄຟ,ບັດເຊີນ), ສະເລ່ຍລາຍຈ່າຍ ບ້ານ ນ້ຳມິ່ງ ແມ່ນ:**267,662,000** ກີບ/ປີ/ບ້ານ, ບ້ານ ກິ່ວຕະລຸນ II ສະເລ່ຍລາຍຈ່າຍແມ່ນ **419,900, 000** ກີບ/ປີ/ບ້ານ, ໃນນັ້ນທັງ 2 ບ້ານ ລາຍຈ່າຍທີ່ຫຼາຍກ່ວາໝູ່ແມ່ນຊື້: ເຄື່ອງນຸ່ງຮົ່ມ ແລະ ຊື້ອາຫານ (ປາແດກ,ແປ້ງນົວ,ຊີ້ນ ແລະ ປາ)

*ການຄັດເລືອກມາດຖານ*

ສຳລັບການຄັດເລືອກຜະລິດຕະພັນເຄື່ອງປ່າຂອງດົງທີ່ສຳຄັນແມ່ນປະຊາຊົນເປັນຜູ້ຄັດເລືອກເອງ, ໂດຍການຄັດເລືອກເອົາຜະລິດຕະພັນທີ່ເປັນບຸລິມະສິດຂອງບ້ານ ແລະ ເປັນໄປໄດ້ສຳລັບການພັດທະນາ ທັງໝົດນີ້ ລ້ວນແລ້ວແຕ່ມີຄວາມສຳຄັນ ສຳລັບກິນ, ຂາຍ ແລະ ຊົມໃຊ້ ທັງ 2 ບ້ານ ໄດ້ຄັດ ເລືອກເອົາ ຜະລິດຕະພັນ ດັ່ງລຸ່ມນີ້:

- ບ້ານ ນ້ຳມິ່ງ ຜະລິດຕະພັນທີ່ເອົາມາຄັດເລືອກມາດຖານມີທັງໝົດ 11 ຊະນິດຄື: ໜໍ່ໄມ້ຊາງ, ປາ, ໜໍ່ຫວາຍຂົມ, ແຂມ, ປໍສາ, ໝາກປີປ່າ, ຟືນ, ຫຍ້າຄາ, ໄມ້ຈິງ, ໃບຕອງ, ໜໍ່ໄມ້ຫົກ.
- ບ້ານ ພູຄູນນ້ອຍ ຜະລິດຕະພັນທີ່ເອົາມາຄັດເລືອກມາດຖານມີທັງໝົດ 13 ຊະນິດຄື: ປາ, ຜັກກູດນ້ຳ, ໜູ, ປູ, ແຂມ, ປໍສາ, ໜໍ່ໄມ້ຊາງ, ໜໍ່ໄມ້ຫົກ, ໄມ້ຊາງ, ໄມ້ຈິງ, ຫຍ້າຄາ, ໄມ້ບົງ, ໃບຕອງ

*ການວິເຄາະບັນຫາ*

ຜ່ານການຄັດເລືອກມາດຖານເຄື່ອງປ່າຂອງດົງສາມາດຮູ້ໄດ້ຜະລິດຕະພັນທີ່ເປັນບູລິມະສິດຂອງທັງ 2 ບ້ານ ແລະ ຍັງເລືອກເອົາຊະນິດທີ່ຄືກັນເຊັ່ນ: ແຂມ, ປໍສາ ຊະນິດທີ່ແຕກຕ່າງແມ່ນ ໝາກປີປ່າ,ສາເຫດທີ່ທັງ 2 ບ້ານເລືອກເອົາ 2 ຊະນິດ ຜະລິດຕະພັນເນື່ອງຈາກວ່າສ້າງລາຍ ຮັບໃຫ້ແກ່ ບ້ານຫຼາຍກ່ວາໝູ່ ແລະ ມີຫຼາຍ ທັງ 2 ບ້ານ ຍ້ອນ ປະຊາຊົນ ໃນເຂດນີ້ໄດ້ປູກເສີມຜະລິດຕະພັນ ດັ່ງກ່າວໃສ່ໃນ ພື້ນທີ່ຂອງ ຕົນເອງ, ແຕ່ລະຊະນິດແມ່ນມີ ບັນຫາ ແຕກຕ່າງກັນ

***ການສຳຫຼວດພື້ນທີ່***

ລັກສະນະລວມຂອງພື້ນທີ່ປ່າທັງ 2 ບ້ານແມ່ນມີລັກສະນະຄ້າຍຄືກັນຄືເປັນປ່າເລົ່າອ່ອນ, ເຂດນີ້ ຕົ້ນໄມ້ໃຫຍ່ຈະບໍ່ມີຫຼາຍເນື່ອງຈາກວ່າທັງສອງບ້ານຕັ້ງຢູ່ເຂດເນີນສູງບໍ່ມີທົ່ງພຽງພໍທີ່ຈະເຮັດນາໄດ້ ດັ່ງນັ້ນ, ເຂົາຈິ່ງ ຍຶດຖືອາຊີບເຮັດໄຮ່ເປັນຕົ້ນຕໍ ເປັນສາຍເຫດທີ່ເຮັດໃຫ້ປ່າທີ່ເຄີຍເປັນປ່າ ດົງມາກ່ອນ ກາຍມາເປັນ ປ່າ ເລົ່າ ແລະ ບາງບ່ອນກໍ່ມີລັກສະນະເປັນທົ່ງຫ້ຍາຄາ ເຄື່ອງປ່າຂອງ ດົງທີ່ ເປັນ ສິນຄ້າທີ່ພົບເຫັນໃນ ເຂດນີ້ແມ່ນ : ແຂມ,ປໍສາ, ສ່ວນເຄືອງປ່າຂອງດົງທີ່ນຳມາບໍລິໂພກ ແລະ ນຳມາຊົມໃຊ້ ແມ່ນ ມີ ຫຼາຍຊະນິດ.

***ສຳພາດ 3 ລະດັບຄອບຄົວ***

ເພື່ອເບິ່ງທ່າແຮງຂອງເຄື່ອງປ່າຂອງດົງໃນການສ້າງລາຍຮັບໃຫ້ແກ່ຄອບຄົວ.

- ຄອບຄົວຮັ່ງມີ: ເຄື່ອງປ່າຂອງດົງເຫັນວ່າບໍ່ມີຄວາມສຳຄັນຖ້າທຽບໃສ່ລາຍຮັບອື່ນໆ ຂອງຄອບຄົວ ເຊິ່ງມີພຽງແຕ່19%(ບ້ານນ້ຳມີ່ງ)ສ່ວນບ້ານ ກົ່ວຕະລຸນແມ່ນບໍ່ມີລາຍຮັບມາຈາກເຄື່ອງປ່າຂອງດົງເລີຍ.
- ຄອບຄົວປານກາງ: ຄືກັນກັບຄອບຄົວຮັ່ງມີ, ເຄື່ອງປ່າຂອງດົງແມ່ນບໍ່ມີຄວາມສຳຄັນປານໃດຖ້າທຽບໃສ່ລາຍຮັບອື່ນໆມີພຽງແຕ່ 8% (ບ້ານນ້ຳມີ່ງ) ແລະ 9% (ບ້ານ ກົ່ວຕະລຸນ)ຂອງລາຍຮັບທັງໝົດ.
- ຄອບຄົວທຸກຈົນ: ຖ້າທຽບໃສ່ຄອບຄົວຮັ່ງມີແລະປານກາງເຄື່ອງປ່າຂອງດົງເຫັນວ່າມີຄວາມສຳຄັນຫຼາຍ ເຊິ່ງມີ 52% (ບ້ານ ນ້ຳມີ່ງ) ແລະ 30% (ບ້ານກົ່ວຕະລຸນ)ເນື່ອງຈາກວ່າບໍ່ມີພື້ນຖານທຳການຜະລິດ ສະນັ້ນຈຳເປັນ ຕ້ອງເຂົ້າປ່າ ເພື່ອຊອກເຄື່ອງປ່າຂອງດົງມາຂາຍ, ຖ້າແມ່ນຊ່ວງທຳການຜະລິດ ກໍ່ໄປຮັບຈ້າງ ເພື່ອມາຊື້ເຂົ້າກິນ.

# ຂໍ້ສະເໜີ

ຜ່ານການຝຶກອົບຮົມໃຫ້ພະນັກງານເມືອງ ແລະ ການເກັບຂໍ້ມູນຢູ່ໃນພາກສະໜາມ (ບ້ານ ນ້ຳມີ່ງ ແລະ ບ້ານ ກິ່ວຕະລຸນ II ສາມາດຮູ້ໄດ້ເຖິງຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ແລະ ທ່າແຮງຂອງເຄື່ອງປ່າຂອງດົງ ທີ່ມີຢູ່ໃນ 2 ບ້ານ, ດັ່ງນັ້ນຈຶ່ງສະເໜີໃຫ້ໂຄງການສຸພານິມິດດັ່ງລຸ່ມນີ້:

1. ການເກັບກຳຂໍ້ມູນຕ້ອງໃຊ້ເວລາຫຼາຍກ່ວານີ້ ເພື່ອໃຫ້ໄດ້ຂໍ້ມູນທີ່ລະອຽດ ແລະ ຊັດເຈນ
2. ພະນັກງານທີ່ລົງເກັບກຳຂໍ້ມູນແມ່ນໃຫ້ມີຄວາມອົດທົນ, ຕ້ອງໃຫ້ກຽດຊາວບ້ານຢູ່ຕະຫຼອດເວລາ , ບໍ່ໃຫ້ແຊງຄຳເວົ້າຂອງຊາວບ້ານ ເພາະຂໍ້ມູນທຸກຢ່າງຕ້ອງອອກຈາກປາກຂອງຊາວກະສິກອນເອງ.

### *ຂໍ້ສະເໜີຂອງຊາວກະສິກອນ*

<u>ບ້ານ ນ້ຳມີ່ງ:</u>

- ຢາກປູກແຂມ ແລະ ປໍສາ ໃສ່ໃນພື້ນທີ່ຂອງຕົນເອງ
- ຢາກຮູ້ເຕັກນິກວິທີການ ແລະ ຊ່ວງເວລາປູກທີ່ເໝາະສົມ

<u>ບ້ານ</u> <u>ກິ່ວຕະລຸນ</u> <u>II</u>

- ຢາກໃຫ້ຂັ້ນເທິງມາແນະນຳວິທີການ ແລະ ເຕັກນິກໃນການປູກ ປໍສາ ແລະ ແຂມ

### *<u>ຂໍ້ສະເໜີຂອງນັກວິຊາການ ສູນຄົ້ນຄ້ວາ ແລະ SNV</u>*

- ສະເໜີໃຫ້ຫ້ອງການສົ່ງເສີມກະສິກຳເມືອງ ລົງໄປແນະນຳທາງກ້ານເຕັກນິກ ແລະ ວິທີການປູກປໍສາ , ແຂມ ຕື່ມອີກ ແລະ ຈັດເຝິກອົບຮົມໃຫ້ຊາວບ້ານ ກ່ຽວກັບ ລະບຽບການເກັບ ກູ້ເຄື່ອງປ່າຂອງດົງ (ແຂມ ແລະ ປໍສາ) ທັງ 2 ຊະນິດເຫັນວ່າມີຄວາມສຳຄັນຫຼາຍໃນການສ້າງລາຍຮັບໃຫ້ແກ່ບ້ານ, ສະພາບພື້ນທີ່ກໍ່ເໝາະສົມໃນການປູກ, ຜະລິດຕະພັນມີຕະຫຼາດຮອງຮັບ, ລາຄາດີ ,ເສັ້ນ ທາງຄົມມະນາຄົມຂົນສົ່ງສະດວກ, ດັ່ງນັ້ນ ຄວນປົກປັກຮັກສາ ແລະ ມີການປູກເສີມ ເພື່ອບໍ່ໃຫ້ມັນດັບສູນ ແລະ ໄດ້ນຳໃຊ້ຍາວນານ
- ສຳລັບໝາກປີປ່າອາດຈະເປັນບຸມະສິດງບ້ານບໍ່ໄດ້ເນື່ອງຈາກວ່າຄຸນປະໂຍດບໍ່ມີຫຼາຍ, ລາຄາຕ່ຳ, ໝາກກໍ່ບໍ່ສາມາດກິນໄດ້.

# *ເອກະສານຊ້ອນທ້າຍ*

- ລາຍຊື່ຜະລິດຕະພັນສຳລັບກິນ, ຂາຍ ແລະ ຊົມໃຊ້

| ບ້ານ ນ້ຳມີ່ງ | | | ບ້ານ ກິ່ວຕະລຸນII | | |
|---|---|---|---|---|---|
| ກິນ | ຂາຍ | ຊົມໃຊ້ | ກິນ | ຂາຍ | ຊົມໃຊ້ |
| ໜໍ່ຊາງ | ແຂມ | ໄມ້ປ່ອງ | ໜໍ່ຊາງ | ແຂມ | ຫ້ບາຄາ |
| ໜໍ່ຫົກ | ປໍສາ | ຫຍ້າ | ໜໍ່ຫົກ | ປໍສາ | ໄມ້ຊາງ |
| ໜໍ່ບົງ | ໝາກປີປ່າ | ໄມ້ຈິງ | ໜໍ່ບົງ | ໜໍ່ຊາງ | ໄມ້ຈິງ |
| ໜໍ່ຫວາຍຂົມ | ຫົວຂາ | ໄມ້ບົງ | ເຫັດຊາງ | ໜໍ່ຫົກ | ເສັ້ນຫວາຍ |
| ຜັກກູດງ້ອງ | ໜໍ່ບົງ | ກົກປໍ | ເຫັດສະນຸ້ນ | ໜໍ່ບົງ | ໄມ້ຫົກ |
| ຜັກກູດນ້ຳ | ເຫັດຊາງ | ໃບຕອງ | ເຫັດປວກ | ເຫັດປວກ | ໄມ້ບົງ |
| ຜັກກາດຮອງ | ຜັກເນົ່າ | ໄມ້ເຮ້ຍ | ເຫັດຄົນ | ເຫັດຄົນ | ໃບຕອງປ່າ |
| ຜັກຫວານ | ເຫັດບີ | ເຄືອຫວາຍ | ເຫັດບີ | ເຫັດຫູາດ | ປໍປ່າ |
| ຜັກຮາດ | ເຫັດປວກ | ຟືນ | ຜັກຮາກ | ເຫັດສະນຸ້ນ | ແຂມ(ເຮັດຢູກວດ) |
| ຜັກເຂົາ | ເຫັດຄົນ | ໄມ້ຫູ້ວ | ຜັກຫວານ | ເຫັດບີ | ໄມ້ເຮັບ(ປູກ) |
| ໝາກຕາວ | ເຫັດໂຄກ | ຂີ້ຊີ | ຜັກເນົ່າ | ເຫັດຊາງ | |
| ໝາກປີປ່າ | ເຫັກເຫືອກ | ກົກຕຽງ | ຜັກກູດໄຮ່ | ຜັກເນົ່າ | |
| ຜັກແຕກ | ເຫັດນະນຸ້ນ | ຂີ້ຄັ່ງ | ຜັກກູດນ້ຳ | ຜັກຫວານ | |
| ຜັກຫ້ຍາເຮືອບິນ | ໄມ້ດີ້ວ(ໄມ້ຊາງ) | | ບອນ | ຜັກກູດໄຮ່ | |
| ໃບບອນ | ໃບຕອງປ່າ | | ໝາກປີ | ໝາກແຟນ | |
| ສະຄ່ານ | ປາ | | ຜັກໝອກ | ໝາກລິນໄມ້ | |
| ຢານາງ | ຫອຍ | | ຜັກກາດນາ | ໝາກໄຟ | |
| ດອກຂ່າປ່າ | ໝູ | | ບອນໝາມ | ໝາກກອກ | |
| ເຫັດປວກ | ນົກ | | ຜັກຕົບ | ໝາກກໍ່ | |
| ເຫັດຄົນ | ຕຸ້ນ | | ຜັກຫົມໝາມ | ຫົວຄ່າ | |
| ເຫັດໂຄງ | | | ຜັກໄຮ່ | ປູ | |
| | | | ຜັກອີ່ເລີດ | ປາ | |
| | | | ຜັກຮາດຮົນ | ໝູ | |
| | | | ຜັກນອດ | ຈີນາຍ | |
| | | | ຜັກກ້ານຖີນ | ໂຕແມ້ | |
| | | | ກົກຈຽງ | ໝາກປີ | |
| | | | ດອກບານ | ໝາກຄົວະ | |
| | | | ດອກຄ່າປ່າ | ໝາກຄໍ້ | |
| | | | ໝາກລິນໄມ້ | ໝາກແຂ່ນ | |
| | | | ດອກປໍສາ | ກົບ | |

| | | | | | |
|---|---|---|---|---|---|
| | | | ດອກແຄ້ປ່າ | ຊຽດ | |
| | | | ໝາກວ່າ | ໝູປ່າ | |
| | | | ໝາກໄຟ | ຕຸ້ນ | |
| | | | ໝາກແຟນ | ອົ້ນ | |
| | | | ໝາກແຂ່ນ | ຫຍ້າຄາ | |
| | | | ໝາກແຄງຟ້າ | ໄມ້ຊາງ | |
| | | | ໝາກສ້ານ | ໄມ້ຈິງ | |
| | | | ໝາກແຄງຂົມ | | |
| | | | ໝາກກໍ່ | | |
| | | | ໝາກຄໍ້ | | |
| | | | ໝາກກອກ | | |
| | | | ປາ | | |
| | | | ປູ | | |
| | | | ຫອຍ | | |
| | | | ກຸ້ງ | | |
| | | | ຄວກ | | |
| | | | ກົບ | | |
| | | | ຊຽດ | | |
| | | | ອີງ | | |
| | | | ຄັນຄາກ | | |
| | | | ຕຸ້ນ | | |
| | | | ອົ້ນ | | |
| | | | ໝູ | | |
| | | | ນົກ | | |
| | | | ໄກ່ປ່າ | | |
| | | | ໝູປ່າ | | |
| | | | ໄຄ | | |

<u>ຕາຕະລາງ ບັນດາລາຍຮັບທັງໝົດຂອງບ້ານ</u>

| ຊະນິດລາຍຮັບ | ບ້ານ ນ້ຳມິ່ງ | | ບ້ານກົ່ວຕະລຸນII | |
|---|---|---|---|---|
| | | % | ກີບ (000,000)/ປີ | % |
| ໝາກເດືອຍ | 21.600.000 | 8 | | |
| ເຂົ້າ ເປືອກ | 44.000.000 | 15.5 | 20.000.000 | 6.6 |
| ຖົ່ວເຫຼືອງ | 6.000.000 | 2.1 | 20.000.000 | 6.6 |
| ມັນດ້າງ | | | 2.000.000 | 0.7 |
| ໝາກແຕງ | | | 32.000.000 | 10.5 |
| ສາລີ | | | 20.000.000 | 6.6 |
| ໝາກງາ | 12.000.000 | 15 | 10.000.000 | 3.3 |
| ເຜືອກ | | | 3.000.000 | 1.0 |
| ໝາກຟັກ | 6.500.000 | 2.3 | 30.000.000 | 9.8 |
| ສວນກ້ວຍ | | | 22.500.000 | 7.4 |
| ໝູ | 14.400.000 | 5.1 | 30.000.000 | 9.83 |
| ໄກ່, ເປັດ | 5.000.000 | 1.8 | 6.000.000 | 1.97 |
| ແບ້ | 8.400.000 | 3 | 16.000.000 | 5.24 |
| *ຜັກຫວານ* | 100.000 | 0.04 | | |
| ປໍສາ | 6.400.000 | 2.3 | 17.500.000 | 5.74 |
| ດອກແຂມ | 33.000.000 | 11.6 | 37.500.000 | 12.29 |
| ໜໍ່ໄມ້ ຫົກ | 3.000.000 | 1.1 | 2.000.000 | 0.66 |
| ໜໍ່ໄມ້ ຊາງ | 3.000.000 | 1.1 | 5.000.000 | 1.64 |
| ໝາກປີປ່າ | 1.500.000 | 0.53 | | |
| ຮັບຈ້າງກໍ່ສ້າງ(ນາຍຊ້າງ) | 12.000.000 | 4.22 | 17.500.000 | 5.74 |
| ໂຮງສີເຂົ້າ | 2.500.000 | 0.9 | 2.100.000 | 0.69 |
| ຮ້ານຂາຍເຄື່ອງຍ່ອຍ | 24.000.000 | 8.44 | 12.000.000 | 3.93 |
| ຂາຍໄມ້ສັກ | 30.000.000 | 10.6 | | |
| ຮັບຈ້າງຖາງຫ້ຍາ | 3.000.000 | 1.1 | | |
| ຊື້ໄມ້ຊາງມາຂາຍ | 8.000.000 | 2.81 | | |
| ບໍລິການແລ່ນລົດໃຫ່ຍ | 40.000.000 | 14.1 | | |
| **ລວມ** | **284.400.000** | 100 | 305.100.000 | 100 |
| **ສະເລ່ຍ/ຄຄ** | | | | |

# *ລາຍຮັບ-ລາຍຈ່າຍ*

## *ບ້ານ ນ້ຳມິ່ງ*

ຄອບຄົວຮັ່ງມີ

| ກິດຈະກຳ | ລາຍຮັບ | % | | ລາຍຈ່າຍ | % |
|---|---|---|---|---|---|
| **ແຂມ** | 1.200.000 | | ອາຫານ | 500.000 | |
| **ສວນໝາກເດືອຍ** | 780.000 | | ເຄື່ອງນຸ່ງ | 400.000 | |
| **ສວນຖົ່ວເຫຼືອງ** | 1.500.000 | | ຢາປິ່ນປົວ | 300.000 | |
| **ສວນໝາກງາ** | 2.100.000 | | **ອື່ນໆ** | 220.000 | |
| **ສວນໝາກຟັກ** | 390.000 | | | | |
| ໄກ່ | 250.000 | | | | |
| ລວມ | 6.220.000 | 100 | | 1.420.000 | |

ຄອບຄົວປານກາງ

| ກິດຈະກຳ | ລາຍຮັບ | ລາຍຈ່າຍ | |
|---|---|---|---|
| ໝາກເດືອຍ | 1.875.000 | ອາຫານ | 100.000 |
| ຖົ່ວເຫຼືອງ | 540.000 | ເຄື່ອງນຸ່ງ | 500.000 |
| ແຂມ | 396.000 | ຢາປິ່ນປົວ | 300.000 |
| ອື່ນໆ | 2.000.000 | ອື່ນໆ | 300.000 |
| | | ຊື້ແນວພັນສັດ | 2.000.000 |
| | | ຄ່າໄຟ,ຄ່ານ້ຳ | 255.000 |
| ລວມ | *4.811.000* | | *3.455.000* |

ຄອບຄົວທຸກຈົນ

| ກິດຈະກຳ | ລາຍຮັບ | ລາຍຈ່າຍ | |
|---|---|---|---|
| **ເຫັດນ້ຳໝາກ** | 5.000 | **ຊື້ເຂົ້າກິນ** | 250.000 |
| ໝາກປີປ່າ | 50.000 | ອາຫານ | 200.00 |
| **ໜໍ່ໄມ້** | 30.000 | | |
| **ຮັບຈ້າງຖາງໄຮ່** | 60.000 | | |
| **ເລື້ອຍໄມ້** | 135.000 | | |
| | *280.000* | | *270.000* |

# *ບ້ານ ກິ່ວຕະລຸນ*

ຄອບຄົວຮັ່ງມີ

| ກິດຈະກຳ | ລາຍຮັບ | | ລາຍຈ່າຍ |
|---|---|---|---|
| ຂາຍໝູ | 3.000.000 | **ຊື້ເຄື່ອງນຸ່ງ** | 4.000.000 |
| ຂາຍສັດປີກ | 1.500.000 | **ຊື້ລົດຈັກ** | 15.500.000 |
| **ຂາຍຜັກ** | 3.000.000 | **ຊື້ລົດຖີບ** | 550.000 |
| **ໝາກແຕງ** | 4.500.000 | **ຊື້ຢາປິ່ນປົວ** | 1.500.000 |
| **ໝາກງາ** | 1.800.000 | **ສົ່ງລູກເຂົ້າຮຽນ** | 4.800.000 |
| **ຂາຍເຂົ້າສານ** | 35.000.000 | **ຊື້ໂຮງສີເຂົ້າ** | 3.800.000 |
| **ຂາຍເຄື່ອງຍ່ອຍ** | 24.000.000 | **ອື່ນໆ** | 1.000.000 |
| **ລວມ** | 72.800.000 | | 27.350.000 |

ຄອບຄົວປານກາງ

| ກິດຈະກຳ | ລາຍຮັບ | ລາຍຈ່າຍ | |
|---|---|---|---|
| **ຖົ່ວເຫຼືອງ** | 800.000 | ອາຫານ | 600.000 |
| ໝາກງາ | 500.000 | ເຄື່ອງນຸ່ງ | 1.500.000 |
| **ສາລີ** | 1.000.000 | **ນໍ້າ,ໄຟ,ສັງຄົມ** | 836.000 |
| **ໝາກແຕງ** | 1.500.000 | | |
| **ໝາກຟັກ** | 300.000 | | |
| **ໝາກໂຕນ** | 150.000 | | |
| **ມັນດ້າງ** | 100.000 | | |
| **ໝາກກວ້ຍ** | 500.000 | | |
| **ປໍສາ** | 300.000 | | |
| **ແຂມ** | 200.000 | | |
| **ລວມ** | 5.350.000 | | 2.936.000 |

ຄອບຄົວທຸກຈົນ

| ກິດຈະກຳ | ລາຍຮັບ | ລາຍຈ່າຍ | |
|---|---|---|---|
| **ແຂມ** | 1.500.000 | ເຂົ້າກິນ | 4.000.000 |
| **ປໍສາ** | 700.000 | ເຄື່ອງນຸ່ງ | 500.000 |
| **ໜໍ່ໄມ້** | 500.000 | ອາຫານ | 600.000 |
| **ຖົ່ວເຫຼືອງ** | 500.000 | **ຄ່ານໍ້າ** | 18.000 |
| **ໝາກຟັກ,ໂຕນ** | 500.000 | **ຄ່າໄຟ** | 10.000 |
| **ລາຍຮັບອື່ນໆ** | 1.500.000 | ຢາປິ່ນປົວ | 600.000 |
| | | **ຈ່າຍອື່ນໆ** | *300.000* |
| **ລວມ** | ***5.200.000*** | | 6.028.000 |